# 1. ຈຸດປະສົງ ແລະເປົ້າໝາຍຂອງການສຳຫລວດ :

ປະຕິບັດຕາມແຜນການດຳເນີນງານຂອງສູນສະຖິຕິແຫ່ງຊາດ ປະກອບກັບການຊ່ວຍເຫລືອທາງດ້ານງົບປະມານ ແລະວິຊາການ ຈາກອົງການສິດາ ປະເທດ ສະວີເດັນ, ສະນັ້ນ ສູນສະຖິຕິແຫ່ງຊາດ ຈຶ່ງໄດ້ກະກຽມການສຳຫລວດຄົວເຮືອນປະຈຳປີ, ຊຶ່ງຈະເລີ້ມຕົ້ນສຳຫລວດໃນທ້າຍເດືອນ 11 ຫາຕົ້ນເດືອນ 12 ປີ 2005 ເປັນຕົ້ນໄປ ກຳນົດໄລຍະການສຳຫລວດແມ່ນ 15 ມື້ຕໍ່ບ້ານ ຈຶ່ງສິ້ນສຸດການສຳຫລວດຢູ່ພາກສະໜາມ. ປີນີ້ເປັນປີທີສາມຂອງການສຳຫລວດຄົວເຮືອນ ແລະ ຈະໄດ້ສືບຕໍ່ດຳເນີນການສຳຫລວດນີ້ທຸກໆປີ.

ເປົ້າໝາຍຂອງການສຳຫລວດ ແມ່ນບັນດາຄົວເຮືອນສ່ວນບຸກຄົນ ເພື່ອເກັບກຳ ແລະສຳພາດຫົວໜ້າ ແລະສະມາຊິກໃນຄົວເຮືອນ ກ່ຽວກັບການໃຊ້ຈ່າຍ ແລະຊົມໃຊ້ໃນຄົວເຮືອນຂອງເຂົາເຈົ້າ ຊຶ່ງອາດຈະແມ່ນໃຊ້ຈ່າຍເປັນເງິນສົດ ຫລືນຳໃຊ້ຜົນຜະລິດຂອງຕົນເອງກໍ່ຕາມ ກໍ່ແມ່ນເອົາມາຕີລາຄາເປັນມູນຄ່າ.

ຈຸດປະສົງຕົ້ນຕໍ ຂອງການສຳຫລວດຄັ້ງນີ້ ປະກອບມີ :

- ສາມາດຄິດໄລ່ເສັ້ນຄວາມທຸກຍາກ
- ຄາດຄະເນການຊົມໃຊ້ຂອງຄົວເຮືອນ
- ສຶກສາເບິ່ງເງື່ອນໄຂການດຳລົງຊີວິດຂອງປະຊາຊົນ
- ຄາດຄະເນຜົນຜະລິດຂອງຄົວເຮືອນ

# 2. ໜ້າທີ່ຂອງນັກເດີນສຳຫລວດ :

ຄຸນນະພາບ ຂອງການສຳຫລວດນີ້ ແມ່ນຂຶ້ນກັບນັກເດີນສຳຫລວດເປັນສ່ວນໃຫ່ຍ ໃນການນຳມົດຄຸນນະພາບ ຜົນຂອງການສຳຫລວດ. ດັ່ງນັ້ນ ມັນຈຶ່ງມີຄວາມສຳຄັນຫລາຍ ທີ່ນັກເດີນສຳຫລວດ ແລະນັກກວດກາ ຈະຕ້ອງປະຕິບັດຕາມຄຳແນະນຳໃນປຶ້ມຄູ່ມືນີ້ . ບັນດານັກເດີນສຳຫລວດມີໜ້າທີ່ ແລະພັນທະຕ່າງໆກ່ອນສຳຫລວດ ໃນໄລຍະສຳຫລວດ ແລະພາຍຫລັງສຳຫລວດແລ້ວ.

## *2.1 ໜ້າທີ່ກ່ອນການສຳຫລວດ :*

- ເຂົ້າຮ່ວມການຝຶກອົບຮົມ ທີ່ຄະນະຮັບຜິດຊອບການສຳຫລວດຈັດຂຶ້ນ.
- ກວດກາ ເອກະສານສຳຫລວດ, ໃບສອບຖາມ, ອຸປະກອນຮັບໃຊ້ການສຳຫລວດ ກ່ອນການອອກເດີນທາງ

- ສະເໜີຕົນເອງຕໍ່ກັບອຳນາດການປົກຄອງບ້ານທີ່ຕົນຈະປະຕິບັດການສຳຫລວດ
- ຂຶ້ນບັນຊີຄົວເຮືອນ ແລະຄັດເລືອກຄົວເຮືອນຕົວແທນ
- ນັດພົບກັບບັນດາຄົວເຮືອນຕົວແທນ ໂດຍຜ່ານຄະນະບ້ານເປັນຊີ້ກາງ
- ຈົດກ່າຍລະຫັດທີ່ຕັ້ງໃສ່ໜ້າປົກຂອງໃບສອບຖາມ ແລະປື້ມບັນທຶກປະຈຳວັນຂອງແຕ່ລະຄົວເຮືອນຕົວແທນ.

## *2.2 ໜ້າທີ່ໃນຊ່ວງໄລຍະເດີນສຳຫລວດ :*

- ສຳພາດທຸກຄຳຖາມທີ່ໄດ້ມີໃນແບບໃບສອບຖາມ. ການສຳພາດຕ້ອງປະຕິບັດຕາມການແນະນຳຂອງໃບສອບຖາມ.:
  - ♦ **ແບບສອບຖາມສຳລັບຄົວເຮືອນ.**

    I. ສະມາຊິກຄົວເຮືອນ

    II. ການປຸກສ້າງອາຄານ ແລະທີ່ຢູ່ອາໃສ ໃນ 12 ເດືອນຜ່ານມາ

    III. ທຸລະກິດຂອງຄົວເຮືອນ

    IV. ດ້ານກະສິກຳ

    V. ການຊື້ ເຄື່ອງໃຊ້ຍາວນານໃນ 12 ເດືອນຜ່ານມາ

    VI. ລາຍຮັບ ແລະການໂອນ
- *ການຕິດຕາມ ແລະສະຫລຸບການໃຊ້ຈ່າຍ ແລະລາຍຮັບຂອງຄົວເຮືອນ*

ພາຍຫລັງນັກເດີນສຳຫລວດໄດ້ສຳພາດຄົວເຮືອນໃນມື້ທຳອິດຄົບທຸກໆຄົວເຮືອນຕົວແທນແລ້ວ. ຈະຕ້ອງກັບຄືນໄປກວດກາການຈົດຈ່າຍຂອງຄົວເຮືອນກ່ຽວກັບການໃຊ້ຈ່າຍ, ການຊົມໃຊ້ ແລະລາຍຮັບປະຈຳວັນຂອງບັນດາຄົວເຮືອນຕົວແທນ. ການລົງໄປຕິດຕາມ ແລະກວດກາການຈົດກ່າຍຂອງຄົວເຮືອນ ແມ່ນຂຶ້ນກັບນັກເດີນສຳຫລວດ. ສຳຫລັບຄົວເຮືອນທີ່ຈົດກ່າຍເຂົ້າປື້ມໄດ້ເອງ ນັກເດີນສຳຫລວດຈະຕ້ອງໄປກວດກາ 2 ມື້ຕໍ່ນື່ງຄັ້ງ ເພື່ອສັກຖາມຄືນບາງອັນທີ່ຂຽນບໍ່ແຈ້ງ ແລະໃສ່ລະຫັດຄືນຕາມຄົວເຮືອນຈົດກ່າຍໄວ້ແລ້ວໃນປື້ມຕິດຕາມປະຈຳວັນ.

***ກໍລະນີ :*** ຄົວເຮືອນບໍ່ສາມາດຈົດກ່າຍໄດ້ເອງເຂົ້າປື້ມຕິດຕາມປະຈຳວັນນັ້ນ, ນັກເດີນສຳຫລວດຈະຕ້ອງໄດ້ໄປຈົດກ່າຍເອງທຸກໆ ວັນ ພ້ອມທັງໃສ່ລະຫັດເຂົ້າປື້ມເລີຍ.

## *2.3 ໜ້າທີ່ພາຍຫລັງສຳເລັດການສຳຫລວດ :*

- ສົ່ງບັນດາເອກກະສານທີ່ໄດ້ສຳພາດແລ້ວ ໃຫ້ນັກກວດກາ ລວມມີ :
  1. ໃບສອບຖາມທີ່ສຳພາດແຕ່ລະຄົວເຮືອນຕົວແທນແລ້ວ
  2. ປື້ມບັນທຶກຕິດຕາມການຊົມໃຊ້ ແລະໃຊ້ຈ່າຍປະຈຳວັນ

3. ບັນຊີຄົວເຮືອນ

- ສິ່ງຂ່າວ ກ່ຽວກັບບັນຫາຫຍຸ້ງຍາກຕ່າງໆ ຫລືຂໍ້ສັງເກດຕ່າງໆໃຫ້ນັກກວດກາ

*2.4 ການຝຶກອົບຮົມ ນັກເດີນສຳຫລວດ :*

ຜູ້ທີ່ຖືກຄັດເລືອກ ຈະມາເຮັດວຽກເປັນນັກເດີນສຳຫລວດ ຈຳເປັນຕ້ອງໄດ້ຜ່ານການຝຶກອົບຮົມຢ່າງລະອຽດຄັກແນ. ການຝຶກອົບຮົມປະກອບມີ ການຝຶກອົບຮົມຢູ່ໃນຫ້ອງຮຽນ ແລະຝຶກອົບຮົມຕົວຈິງ (ພາກສະໜາມ). ນັກເດີນສຳຫລວດ ຈະຕ້ອງອ່ານ ແລະຄົ້ນຄວ້າ ທຸກຄຳເວົ້າໃນປື້ມຄູ່ມື ແລະບັນດາໃບສອບຖາມ, ວິທີການຈົດກ່າຍທຸກຂັ້ນຕອນ, ນັກເດີນສຳຫລວດສາມາດຊັກຖາມໄດ້ທຸກເວລາໃນເວລາຝຶກອົບຮົມ ເພື່ອຫລີກເວັ້ນການເຮັດຜິດພາດໃນເວລາປະຕິບັດວຽກງານຕົວຈິງ.

ການຝຶກອົບຮົມນັກເດີນສຳຫລວດ ຈະໃຊ້ເວລາຢູ່ 6 ວັນ, ບໍ່ນັບການເດີນທາງໄປ - ກັບຂອງນັກເດີນສຳຫລວດ ຄື :

1. ຮຽນພາກທິດສະດີຕ່າງໆ 3 ວັນ
2. ລົງຝຶກຫັດຕົວຈິງຢູ່ບ້ານ 2 ວັນ (ຮັບຜິດຊອບຢ່າງໜ້ອຍ 2 ຄົວເຮືອນ)
3. ທົບທວນຄືນ ແລະແຜນການປະຕິບັດຕົວຈິງ 1 ວັນ.

# 3. ບັນດານິຍາມ :

*3.1 ນິຍາມຄົວເຮືອນ ສ່ວນບຸກຄົນ :*

1. ຄົວເຮືອນທີ່ມີຄົນຜູ້ດຽວ ແມ່ນຄົນຜູ້ໜຶ່ງ ທີ່ຢູ່ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງຂອງເຮືອນຢູ່, ຊອກຫາອາຫານສຳລັບຕົວລາວເອງ ແລະສິ່ງຂອງທີ່ຈຳເປັນອື່ນໆສຳຫລັບການດຳລົງຊີວິດ ໂດຍປັດສະຈາກການຊອກຫາຮ່ວມກັນກັບຄົນອື່ນໆ
2. ຄົວເຮືອນມີຫລາຍຄົນ ແມ່ນກຸ່ມຄົນທີ່ມີສອງ ຫຼືຫລາຍກ່ວານັ້ນ ທີ່ຢູ່ທັງໝົດ ຫຼືສ່ວນໜຶ່ງຂອງເຮືອນຢູ່, ຊອກຫາອາຫານ ແລະສິ່ງຂອງຕ່າງໆທີ່ຈຳເປັນໃນການດຳລົງຊີວິດຮ່ວມກັນ. ປົກກະຕິແລ້ວຄົວເຮືອນແບບນີ້ປະກອບມີຜົວ,ເມັຽ ແລະລູກນ້ອຍ, ພີ່ນ້ອງ, ຄົນຮັບໃຊ້ ທີ່ອາໃສຢູ່ນຳ. ຜູ້ໃຫ້ເຊົ່າເຮືອນຈະຕ້ອງເອົາອອກຕ່າງຫາກ ບໍ່ນັບປັນສະມາຊິກຂອງຄົວເຮືອນ (ຄົວເຮືອນ ມັນແຕກຕ່າງກັນກັບຄອບຄົວ)

<u>ຕົວຢ່າງ 1</u>: ຄົວເຮືອນຂອງທ່ານຄຳມີ, ມີສາມຄອບຄົວຢູ່ນຳກັນຄື:1) ຄອບຄົວຂອງທ່ານຄຳມີ ຜົວ, ເມັຍ, ລູກຜູ້ບໍ່ທັນແຕ່ງງານ ແລະພີ່ນ້ອງ. 2) ຄອບຄົວລູກສາວ ຜົວ (ລູກເຂີຍ), ເມຍ ແລະລູກຂອງເຂົາເຈົ້າ. 3) ຄອບຄົວຂອງລູກຊາຍ ຜົວ, ເມຍ (ລູກໃພ້), ຊຶ່ງໄດ້ກິນຢູ່ ແລະໃຊ້ສອຍເຄື່ອງຈຳເປັນຮ່ວມກັນ. ເຮືອນຫັລງນີ້ເອີ້ນວ່າຄົວເຮືອນໜຶ່ງ ໂດຍແມ່ນທ່ານຄຳມີ ເປັນຫົວໜ້າຄົວເຮືອນ

ຕົວຢ່າງ 2: ຄົວເຮືອນຂອງທ່ານ ບຸນຕາ ຊຶ່ງມີຜົວ, ເມຍ, ລູກຊາຍ ແລະພີ່ນ້ອງ (ນ້ອງຊາຍຂອງເມຍ) ດຳລົງຊີວິດ ແລະກິນຢູ່ຮ່ວມກັນໃນເຮືອນຫລັງດຽວກັນ ກໍລະນີນີ້ເອີ້ນວ່າຄົວເຮືອນນຶ່ງ.

ຕົວຢ່າງ3: ກໍລະນີບໍ່ແມ່ນຄົວເຮືອນດຽວ, ຄົວເຮືອນຂອງທ້າວສອ້ຍມີເຮືອນ 4 ຫ້ອງ,ໃນນັ້ນມີ 1 ຫ້ອງໄດ້ມີຄົວເຮືອນ ທ້າວສີມາເຊົ່າຢູ່ ຖືກວ່າເປັນສອງຄົວເຮືອນ, ເພາະທຸກການໃຊ້ຈ່າຍແມ່ນ ແລະກິນຢູ່ແມ່ນແຍກກັນ

*3.2 ການຢູ່ປະຈຳ ແລະບໍ່ຢູ່ປະຈຳ*

- ຢູ່ປະຈຳແມ່ນ(ແມ່ນສະມາຊິກຄົວເຮືອນ): ບັນດາຄົນຊຶ່ງຕົວຈິງໄດ້ຢູ່ເປັນປົກກະຕິໃນຄົວເຮືອນ ປະຈຸບັນ, ຕົວຢ່າງ: ບັນດາສະມາຊິກຄົວເຮືອນທີ່ໄດ້ກິນເຂົ້າຮ່ວມກັນ ທຸກວັນໃນປະຈຸບັນນີ້

- ຄົນບໍ່ມີໜ້າຊົ່ວຄາວ(ແມ່ນສະມາຊິກຄົວເຮືອນ): ແມ່ນບັນດາຄົນທີ່ຖືກແຕ່ງຕັ້ງໄປປະຕິບັດງານ, ໄປອອກແຮງງານຢູ່ບ່ອນອື່ນ, ປິ່ນປົວພະຍາດ, ທ່ອງທ່ຽວ, ທັດສະນະສຶກສາ, ຮ່ຳຮຽນໄລຍະສັ້ນຫລຸດ 6 ເດືອນລົງມາ

ຕົວຢ່າງ: ທ້າວຄຳແມ່ນຖືກຢູ່ເລືອກເປັນຄົວແທນໃນບ້ານ, ແຕ່ຊ່ວງເວລາສຳຫລວັດລາວໄດ້ໄປຝຶກອົບຮົມຢູ່ຍີ່ປຸ່ນ ປະມານ 2 ເດືອນຈຶ່ງຈະກັບ, ກໍລະນີຖືວ່າຍັງແມ່ນສະມາຊິກຂອງຄົວເຮືອນ

- ຄົນຢູ່ບໍ່ເປັນປະຈຳ(ບໍ່ແມ່ນສະມາຊິກຂອງຄົວເຮືອນ): ແມ່ນບັນດາຄົນທີ່ຖືກແຕ່ງຕັ້ງໄປປະຕິບັດ ງານ, ໄປອອກແຮງງານຢູ່ບ່ອນອື່ນ, ປິ່ນປົວພະຍາດ, ທ່ອງທ່ຽວ, ທັດສະນະສຶກສາ, ຮ່ຳຮຽນໄລຍະຍາວແຕ່ 6 ເດືອນຂຶ້ນໄປ,

ຕົວຢ່າງ: - ບັນດາຄົນທີ່ຖືກແຕ່ງຕັ້ງໄປປະຕິບັດງານກາຍ 6ເດືອນ

- ໄປອອກແຮງງານຢູ່ພາຍໃນ ຫລືຕ່າງປະເທດ ກາຍ 6ເດືອນ
- ໄປຮຽນໄລຍະຍາວຢູ່ພາຍໃນຫລືຕ່າງປະເທດເກີນ 6 ເດືອນ

*3.3 ການກຳນົດປະເພດບ້ານ*

ການກຳນົດບ້ານເປັນບ້ານຕົວເມືອງ ຫລືບ້ານຊົນນະບົດ ແມ່ນຂຶ້ນກັບ 5 ມາດຖານ ຂ້າງລຸ່ມນີ້ :

1. ເປັນທີ່ຕັ້ງຂອງທີ່ວ່າການປົກຄອງເມືອງ ຫລືແຂວງ.
2. ມີເສັ້ນທາງລົດໃຫ່ຍ ທ່ຽວໄດ້ຕະຫລອດປີ.
3. ມີນ້ຳປະປາໃຊ້ໃນບ້ານ.
4. ມີໄຟຟ້າໃຊ້.
5. ມີຕະຫລາດຊື້ຂາຍຕະຫລອດວັນ.

ຖ້າບ້ານໃດຫາກມີ 3 ໃນ 5 ມາດຖານ ໃຫ້ຖືວ່າບ້ານນີ້ ແມ່ນບ້ານຕົວເມືອງ ແລະໃຫ້ຈົດກ່າຍ ລະຫັດ "1" ເຂົ້າໃນຮູບ 4 ແຈ ທີ່ກຳນົດໄວ້.

ສຳຫລັບບ້ານຊົນນະບົດ ແມ່ນໄດ້ ແຍກອອກເປັນ 2 ປະເພດບ້ານ, ບ້ານຊົນນະບົດມີທົນທາງແມ່ນ "2" ແລະຊົນນະບົດບໍ່ມີທົນທາງແມ່ນ "3", ກໍລະນີບ້ານທີ່ຕັ້ງຢູ່ພາກນ້ຳຊຶ່ງບໍ່ທັນມີຂົວຂ້າມໄປໂດຍກົງ, ເວລາທີ່ຕ້ອງການໄປເຖິງບ້ານດັ່ງກ່າວ ຕ້ອງໃຊ້ເຮືອຂ້າມແມ່ນຖືວ່າບ້ານບໍ່ມີທົນທາງ

## *3.4. ການໃຊ້ຈ່າຍຂອງຄົວເຮືອນ :*

ການໃຊ້ຈ່າຍຂອງຄົວເຮືອນແມ່ນ:

ກ. ການໃຊ້ຈ່າຍເປັນເງິນສົດ ໃນການຊື້ປະເພດອາຫານ(ເຂົ້າ, ຊີ້ນ, ໝາກໄມ້, ຜັກຕ່າງໆ...) ແລະບໍ່ແມ່ນອາຫານ (ເຄື່ອງນຸ່ງ, ເຄື່ອງໃຊ້ຄົວເຮືອນ, ເຄື່ອງໃຊ້ສ່ວນຕົວ...) ເພື່ອມາຮັບໃຊ້ຊີວິດການເປັນຢູ່.

ຂ. ຊື້ຜະລິດຕະພັນ, ວັດຖຸ ແລະສິນສິນຄ້າ ເພື່ອຮັບໃຊ້ໃນການກະສິກຳ, ທຸລະກິດ ແລະການລົງທຶນ

ຄ. ການໃຊ້ຈ່າຍເປັນເງິນສົດ ສຳລັບພາສີ, ບໍລິຈາກ, ດອກເບັ້ຍຂອງເງິນກູ້ຢືມ ແລະອື່ນໆທີ່ບໍ່ໃຊ້ເຂົ້າໃນການຊົມໃຊ້.

## *3.5 ການຊົມໃຊ້ຂອງຄົວເຮືອນ*

ການຊົມໃຊ້ແມ່ນ ຜະລິດຕະພັນທີ່ຄົວເຮືອນຜະລິດເອງ, ຊອກຫາມາເອງເຊັ່ນ: ພືດ, ຜັກ, ໝາກໄມ້, ສັດລ້ຽງປະເພດຕ່າງໆ, ປາ ແລະສັດປ່າທີ່ຫາມາໄດ້ທີ່ມີຈຸດປະສົງ ເພື່ອມາຊົມໃຊ້ ໃນຄົວເຮືອນສະເພາະ. *ກໍລະນີຜະລິດຕະພັນທີ່ຊື້ມາແລ້ວຄົວເຮືອນມາຊົມໃຊ້ (ກິນ) ແມ່ນບໍ່ຖືວ່າການຊົມໃຊ້ຢູ່ນີ້, ເພາະຖືວ່າເປັນ ການໃຊ້ຈ່າຍແມ່ນຈະຈົດໃນເວລາຊື້ທຳອິດແລ້ວ.*

## *3.6 ການແລກປ່ຽນ*

ໝາຍເຖິງການແລກປ່ຽນວັດຖຸສິ່ງຂອງທີ່ຕົນເອງຜະລິດເອງ, ຫາມາເອງເພື່ອແລກປ່ຽນ ວັດຖຸສິ່ງຂອງຈາກຄົນອື່ນ, ໃນນີ້ການແລກປ່ຽນຄົວເຮືອນຈະບັນທຶກສິ່ງຕົນເອງໃຫ້ໄປ ແລະຈຸດປະສົງແມ່ນ ຂຶ້ນກັບຕົນເອງຈະເອົາມານຳໃຊ້ (ກະສິກຳ, ຄົວເຮືອນ ຫລືທຸລະກິດ), ສຳຫລັບລະຫັດລາຍການກໍ່ອີງ ໃສ່ຈຸດ ປະສົງ, ຖ້າຊົມໃຊ້ຄົວເຮືອນ ແມ່ນໃສ່ລະຫັດຄືກັບການໃຊ້ຈ່າຍ-ຊົມໃຊ້ພາກ I ຢູ່ໃນລາຍການຂອງຄົວເຮືອນ, ຖ້າເພື່ອການດຳເນີນ( ຜະລິດກະສິກຳ/ປ່າໄມ້/ການປະມົງ ຫລື

ການຄ້າ/ການທຸ ລະກິດ) ລະຫັດຢູ່ໃນພາກ II, ຖ້າເພື່ອການລົງທຶນ ຫລືແລກປ່ຽນເຄື່ອງໃຊ້ຍາວນານ ລະຫັດພາກ III.

# 4. ການຂຶ້ນບັນຊີຄົວເຮືອນ :

## *4.1 ຫົວໜ້າຄົວເຮືອນ :*

ຫົວໜ້າຄົວເຮືອນ ແມ່ນຜູ້ມີບົດບາດ ແລະເຄົາລົບນັບຖືຈາກບັນດາສະມາຊິກຂອງຄົວເຮືອນ, ສ່ວນຫລາຍລາວຈະເປັນຜູ້ຫາລາຍຮັບມາໃຫ້ຄົວເຮືອນຫລາຍກ່ວາສະມາຊິກຂອງຄົວເຮືອນ ທັງເປັນຜູ້ເບິ່ງແຍງສະຫວັດດີການຂອງຄົວເຮືອນ. ຫົວໜ້າຄົວເຮືອນອາດແມ່ນເພດຊາຍຜູ້ເປັນຜົວ ຫລື ອາດຈະແມ່ນເພດຍິງຜູ້ເປັນເມັຍ.

## *4.2. ການຂຶ້ນບັນຊີຄົວເຮືອນ :*

ໃນການສຳຫລວດຄັ້ງນີ້ຈະມີ 2 ຂັ້ນຕອນການຂຶ້ນບັນຊີ:

- ອີງໃສ່ 5 ຄົວເຮືອນຈາກການສຳຫລວດຄົວເຮືອນປະຈຳປີ 2004, ຊຶ່ງບັນຊີດັ່ງກ່າວແມ່ນທາງ ສູນສະຖິຕິແຫ່ງຊາດໄດ້ກຽມມາພ້ອມແລ້ວ, ມີແຕ່ໃຫ້ທ່ານກວດຄືນເບິ່ງ ວ່າຈຳນວນລາຍຊື່ຫົວໜ້າຄົວເຮືອນດັ່ງກ່າວຍັງມີຄົບຖ້ວນຢູ່ໃນບ້ານນັ້ນ, ກໍລະນີຄົວເຮືອນໃດ ຫາກຍົກຍ້າຍ ໄປບ້ານອື່ນຢູ່ຫ່າງໄກແມ່ນ ລົບຂ້າອອກ ແຕ່ບໍ່ໃຫ້ປ່ຽນເລກລຳດັບຄົວເຮືອນ.

- ໃຫ້ຂຶ້ນບັນຊີໃໝ່ຈຳນວນຄົວເຮືອນທັງໝົດໃນບ້ານຍົກເວັ້ນ 5 ຄົວເຮືອນທີ່ຢູ່ໃນ ບັນຊີກ່ອນນັ້ນແລ້ວ, ການຈົດກ່າຍນັກເດີນສຳຫລວດຕ້ອງຈົດລະຫັດທີ່ຕັ້ງຢູ່ປົກກ່ອນແລ້ວຈຶ່ງຈົດລາຍຊື່ຫົວໜ້າຄົວເຮືອນ, ຫລັງຈາກນັ້ນຈົດຈຳນວນຄົວເຮືອນທັງໝົດທີ່ຂຶ້ນໃໝ່ໃສ່ໜ້າປົກ, ການຈົດລາຍຊື່ຫົວໜ້າຄົວເຮືອນຢູ່ໃນຕາຕະລາງແມ່ນເລີ້ມແຕ່ຄົວເຮືອນໃໝ່ທຳອິດຈົນຄົວເຮືອນສຸດທ້າຍໃຫ້ຄົບຖ້ວນ ພ້ອມກັນນັ້ນຕ້ອງຈົດຈຳນວນພົນ ແລະແຍກຍິງໃນແຕ່ລະຄົວເຮືອນ, ສ່ວນຫ້ອງສຸດທ້າຍແມ່ນສຳຫລັບເວລາເລືອກຕົວແທນໃໝ່ຈຶ່ງຈະບັນທຶກເລກລຳດັບຄົວເຮືອນຕົວແທນທີ່ເລືອກໄດ້

*ສິ່ງທີ່ຄວນເອົາໃຈໃສ່ການຈົດບັນຊີລາຍຊື່ຫົວໜ້າຄົວເຮືອນຕ້ອງໄດ້ຖາມນາຍບ້ານລະອຽດວ່າຄົວເຮືອນນັ້ນຍັງອາໃສຢູ່ບ້ານນັ້ນບໍ່ເພື່ອຫລີກເວັ້ນຄວາມຜິດພາດ*

- **ການກວດສອບບ້ານໃຫ້ຖືກຕ້ອງ**

ກ່ອນຈະເລີ່ມສ້າງບັນຊີ, ທ່ານຕ້ອງໝັ້ນໃຈວ່າທ່ານໄດ້ໄປຖືກບ້ານແລ້ວ. ໃຫ້ສັງເກດຮູບພາບຂອງບ້ານ ແລ້ວ ກວດກາເບິ່ງແຜນວາດຂອງບ້ານ ວ່າມັນຖືກຕ້ອງສອດຄ່ອງກັນບໍ່. ນາຍບ້ານຈະເປັນຜູ້ຮູ້ດີ ກ່ຽວກັບຄົວເຮືອນໃດຢູ່ໃນຄວາມຮັບຜິດຊອບຂອງລາວເອງ.

ບາງຄັ້ງ, ທ່ານອາດພົບສະພາບຂອງບ້ານມີການປ່ຽນແປງ:

- ຫາກບ້ານໄດ້ປ່ຽນຊື່ໃໝ່, ການເດີນສຳຫຼວດຖືວ່າປົກກະຕິ ບັນທຶກຊື່ບ້ານໃໝ່ໃສ່.

- ຖ້າບ້ານແຍກອອກເປັນ 2 ບ້ານໃໝ່, ໃຫ້ເອົາບ້ານທີ່ມີຊື່ເກົ່າ, ກໍລະນີທັງສອງບ້ານໄດ້ປ່ຽນຊື່ ແມ່ນໃຫ້ເບິ່ງວ່າບ້ານໃດທີ່ຄົວເຮືອນຕົວແທນ (5ຄົນທີ່ກຳນົດ) ນັ້ນຢູ່ຫລາຍກວ່າແມ່ນເອົາບ້ານນັ້ນ.

- ຖ້າບ້ານຫາກລວມເຂົາກັບບ້ານອື່ນແລ້ວຕັ້ງເປັນບ້ານນຶ່ງໃໝ່. ຖ້າວ່າການຍຸບແຕ່ຊື່ບ້ານຂຶ້ນກັບບ້ານອື່ນແຕ່ທີ່ຕັ້ງຍັງຄືເກົ່າ ແມ່ນໃຫ້ເອົາແຕ່ຈຳນວນຄົວເຮືອນໃນບ້ານເດີມ, ກໍລະນີຫາກຍ້າຍເຂົ້າຢູ່ບ້ານໃນຂອບເຂດດຽວກັນແມ່ນໃຫ້ລວມເອົາໝົດທຸກຄົວເຮືອນ.

- ຖ້າບ້ານຫາກອື່ນມາລວມເຂົາກັບບ້ານຕົວແທນ ກໍລະນີນີ້ແມ່ນໃຫ້ລວມເອົາໝົດທຸກຄົວເຮືອນເລີຍ.

ພາຍຫລັງການຂຶ້ນບັນຊີສຳເລັດຖ້ານັກເດີນສຳຫລວດ ຫາກມີຄຳເຫັນແນວໃດຕໍ່ການປ່ຽນແປງຂອງບ້ານ, ຄົວເຮືອນ ແລະບັນຫາ ອື່ນໆທີ່ກ່ຽວພັນກັບການຂຶ້ນບັນຊີ ແມ່ນໃຫ້ຂຽນລາຍອຽດໃສ່ບ່ອນກຳນົດຄຳເຫັນ ແລະສິ່ງສຳຄັນພາຍຫລັງຂຶ້ນບັນຊີແລ້ວຕ້ອງມີການເຊັນຢັ້ງຢືນຈາກອຳນາດການປົກຄອງບ້ານ

## 5. ວິທີການຄັດເລືອກຕົວແທນ :

ການຄັດເລືອກຕົວແທນໃນການສຳຫລວດຄັ້ງນີ້ ໄດ້ອີງໃສ່ການສຳຫລວດ ຂອງ 2 ປີຜ່ານມາ, ຈຳນວນຄົວເຮືອນຕົວແທນແມ່ນໄດ້ມີການປ່ຽນແປງຄື ມີ 2.400 ຄົວເຮືອນມາເປັນ 2650ຍ້ອນໄດ້ເພີ້ມຈຳນວນຄົວເຮືອນຢູ່ໃນບ້ານຕົວເມືອງຕື່ມບ້ານລະ 5 ຄົວເຮືອນ, ສ່ວນບ້ານແມ່ນຍັງຄືເກົ່າ 240 ບ້ານຕົວແທນໃນຂອບເຂດທົ່ວປະເທດ. ການສຳຫລວດນີ້ໄດ້ໄຊ້ເວລາ 1 ເດືອນເຕັມໂດຍການຈັດແບ່ງການສຳຫລວດເປັນສອງໄລຍະຄື: ສຳຫລວດ 120 ບ້ານໃນ 15 ວັນສຸດທ້າຍຂອງເດືອນ 11/2005 ແລະ ອີກ 120 ບ້ານໃນ15 ວັນທຳອິດຂອງເດືອນ 12/2005 (1 ບ້ານໃຊ້ເວລາສຳຫລວດ 15 ວັນເຕັມ).

- ຂັ້ນຕອນການຄັດເລືອກຄົວເຮືອນຕົວແທນ :

- ອີງຕາມບັນຊີຄົວເຮືອນທີ່ໄດ້ຄັດເລືອກຈາກການສຳຫລວດຄົວເຮືອນປະຈຳປີ 2004, ມີ 5 ຄົວເຮືອນ, ຊຶ່ງແມ່ນ ສູນສະຖິຕິແຫ່ງຊາດເປັນຜູ້ເລືອກໄວ້ແລ້ວ

ການເລືອກຄົວເຮືອນຈາກບັນຊີໃໝ່

- ຊອກຫາ 5 ຄົວເຮືອນ ສຳຫັລບບ້ານຊົນນະບົດ ແລະ 10 ຄົວເຮືອນສຳຫັລບ ບ້ານຕົວເມືອງ ຊຶ່ງອີງໃສ່ບັນຊີທີ່ທ່ານຂຶ້ນໃໝ່ເວລາໄປຮອດບ້ານນີ້ສຳຫລວດ,
ທ່ານຕ້ອງປະຕິບັດຕາມຂັ້ນຕອນດັ່ງນີ້:

ຊອກຫາໄລຍະຫ່າງ: I=N/n

N=ຈຳນວນຄົວເຮືອນທີ່ຂຶ້ນບັນຊີໃໝ່ທັງໝົດ

n= ຈຳນວນຕົວແທນທີ່ຕ້ອງການ (5 ຄົວເຮືອນສຳຫລັບບ້ານຊົນນະບົດ, 10 ຄົວເຮືອນສຳຫລັບບ້ານຕົວເມືອງ), *ກໍລະນີຖ້າ 5 ຄົວເຮືອນຂອງສສຊ ເລືອກໄວ້ນັ້ນຫາກບໍ່ຮອດ 5 ຍ້ອນມີການຍ້າຍ, n ຈະຂຶ້ນກັບຄວາມຕ້ອງການຕົວແທນຕົວຈິງ*

- ກໍລະນີຜົນຫານເປັນເລກເສດ: ຖ້າຜົນຫານ ຂອງ N/n ຫາກເປັນເລກເສດແມ່ນ 4 ລົງມາແມ່ນໃຫ້ຖືເອົາໂຕເລກຖ້ວນເລີຍ, ຖ້າຫາກຕົວເສດ ແມ່ນ 5 ຂຶ້ນເມືອແມ່ນໃຫ້ເພີ້ມຂຶ້ນຕື່ມ1 ຕົວຢ່າງ ຜົນຫານ 5,4 ແມ່ນໃຫ້ເອົາ 5, ຖ້າ 5,5 ແມ່ນໃຫ້ເອົາ 6

ຫລັງຈາກໄດ້ໄລຍະຫ່າງແລ້ວ ໃຫ້ເຮັດສະຫລາກຕາມຈຳນວນໄລຍະຫ່າງ

ຂັ້ນຕອນທຳອິດ: ຄະນະບ້ານຈົກເອົາສະຫລາກ 1 ໃບ,

ຖ້າໄດ້ເລກໃດແມ່ນເປັນຄົວເຮືອນຕົວແທນ ທຳອິດຂອງການຕົວແທນຄັ້ງທີ 2

ຂັ້ນຕອນທີ2: ຄົວເຮືອນຕົວແທນທຳອິດທີຈົກໄດ້ +ໄລຍະຫ່າງ= ຄົວເຮືອນຕົວແທນທີ2

ຂັ້ນຕອນທີ3: ຄົວເຮືອນຕົວແທນທີ2+ໄລຍະຫ່າງ= ຄົວເຮືອນຕົວແທນ ທີ3

ຂັ້ນຕອນທີ4: ຄົວເຮືອນຕົວແທນທີ3+ ໄລຍະຫ່າງ= ຄົວເຮືອນຕົວແທນທີ 4

ຂັ້ນຕອນທີ5: ຄົວເຮືອນຕົວແທນທີ4+ ໄລຍະຫ່າງ= ຄົວເຮືອນຕົວແທນທີ 5

ສຳຫັລບບ້ານຕົວເມືອງແມ່ນໃຫ້ສືບຕໍ່ບວກໄປຈົນໄດ້ຄົບ 10 ຄົວເຮືອນຈຶ່ງຢຸດ

*ສິ່ງສຳຄັນ ເປົ້າໝາຍຕ້ອງໄດ 10 ຄົວເຮືອນຕົວແທນໃນບ້ານສຳຫລັບບ້ານຊົນນະບົດ ແລະ15 ຄົວເຮືອນຕົວແທນສຳຫລັບບ້ານຕົວເມືອງ, ສະນັ້ນກ່ອນອື່ນຕ້ອງກວດເບິ່ງ 5 ຄົວເຮືອນຕາມບັນຊີທີ່ທາງ ສສຊ ກຽມໄວ້ນັ້ນ, ຖ້າວ່າ ບໍ່ເຖິງ 5 ຄົວເຮືອນ ກໍລະນີມີແຕ່ 4 3,... ຄົວເຮືອນແມ່ນໃຫ້ເລືອກຕື່ມໃນເວລາຂຶ້ນບັນຊີໃໝ່.*

ພາຍຫລັງສຳເລັດການເລືອກຄົວເຮືອນຕົວແທນໃໝ່ແລ້ວ, ໃຫ້ຈົດລາຍຊື່ຄົວເຮືອນ ແລະຈຳນວນພົນຂອງຄົວເຮືອນຕົວແທນໃໝ່ຕໍ່ໃສ່ບັນຊີຄົວເຮືອນທີ່ທາງ ສສຊ ກຽມໄວ້ໃຫ້, ຊຶ່ງເລີ້ມຈາກ 16, 17...

ຕົວຢ່າງ: ບ້ານຕົວແທນຊົນນະບົດ ມີ 37 ຄົວເຮືອນ, ໃນນັ້ນ 5 ຄົວເຮືອນເປັນຕົວແທນການສຳຫລວດຄົວເຮືອນ ປະຈຳປີ 2004, ສະນັ້ນໃນບັນຊີໃໝ່ຈະມີພຽງ 32 ຄົວເຮືອນ, ກ່ອນອື່ນຊອກ

ໄລຍະຫ່າງ, ເອົາ 32/5=6.4 ໝາຍຄວາມວ່າໄລຍະຫ່າງ ເທົ່າ 6, ເຮັດສະຫລາກ 6 ໃບ, ສົມມຸດຈົກໄດ້ເລກ 3

ຄົວເຮືອນທີ 3 ເປັນຄົວເຮືອນຕົວແທນທຳອິດ,

ຄົວເຮືອນຕົວແທນທີ2= 3+6= 9

ຄົວເຮືອນຕົວແທນທີ3= 8+6= 14

ຄົວເຮືອນຕົວແທນທີ4= 13+6= 19

ຄົວເຮືອນຕົວແທນທີ5= 18+6= 24

ການໝາຍຄົວເຮືອນຕົວແທນທີ່ເລືອກໄດ້ແມ່ນໃຫ້ຂີດວົງມົນອ້ອມເອົາເລກດຳລັບຄົວເຮືອນໃນຊ່ອງ1 ພ້ອມກັນນັ້ນກໍ່ຕ້ອງຂຽນເລກລຳດັບຄົວເຮືອນທີ່ເລືອກໄດ້ຢູ່ຊ່ອງ5 ເລີ່ມຈາກ1,2... ຫລັງຈາກນັ້ນກ່າຍຄືນຄົວເຮືອນທີ່ເລືອກໄດ້ນັ້ນຕໍ່ໃສ່ບັນຊີ 5 ຄົວເຮືອນທີ່ ສສຊເລືອກໄວ້ກ່ອນໂດຍເອົາຄົວເຮືອນທີ1ຈາກບັນຊີໃໝ່ໃນຊ່ອງ5 ເປັນຄົວເຮືອນທີ 16 ແລະຕໍ່ໆໄປ ຕົວຢ່າງ: ຄົວເຮືອນທີ່3 ໃນບັນຊີໃໝ່ເລືອກໄດ້ໃນຊ່ອງ1 ແລະຊ່ອງ5 ຈະແມ່ນ 1 ເລກທີຄົວເຮືອນໃນບັນຊີຂອງສສຊແມນ 16.

ພາຍຫລັງການເລືອກຕົວແທນສຳເລັດຕ້ອງໄດ້ຈົດກ່າຍບາງຂໍ້ມູນໃສ່ໜ້າປົກຂອງບັນຊໃໝ່ ເຊັ່ນໄລຍະຫ່າງ ແລະລຳດັບຄົວເຮືອນຕົວແທນທຳອິດ(ຈົດຈາກລຳດັບຄົວເຮືອນຊ່ອງ1) ,

## 6. ການແນະນຳ ແລະວິທີຈົດກ່າຍ ການບັນທຶກປະຈຳວັນ :

<u>ແມ່ນໃຜເປັນຜູ້ບັນທຶກ?</u>

- ຫົວໜ້າຄົວເຮືອນ ຫລືຜູ້ທີ່ຮັບຜິດຊອບໃນການໃຊ້ຈ່າຍໃນຄົວເຮືອນເປັນຜູ້ຈົດກ່າຍບັນດາລາຍການຊື້ຂາຍ ແລະການຊົມໃຊ້ຂອງຄົວເຮືອນເຂົ້າຕາຕະລາງ ແລະຕ້ອງຂຽນໃຫ້ຈະແຈ້ງສະອາດ ກ່ຽວກັບລາຍການນັ້ນ, ການບັນທຶກຫົວໜ່ວຍແມ່ນເປັນ ( ກິໂລກຣາມ, ມັດ, ກ້ອນ, ຖົງ... ), ການຊື້ຂາຍ,ການຊົມໃຊ້ຜະລິດຕະພັນຂອງຕົນເອງ ຫລືແລກປ່ຽນ ແມ່ນໃຫ້ຈົດຫົວໜ່ວຍ,ເປັນຈຳນວນ ແລະມູນຄ່າຂອງການຊື້ຂາຍ ແລະການຊົມໃຊ້ ເຖິງຈະເປັນເງິນ, ເປັນວັດຖຸ ຫຼື ເປັນການແລກປ່ຽນ ແມ່ນໃຫ້ຄິດໄລ່ແລ້ວປ່ຽນມາເປັນມູນຄ່າເງິນກີບ.

ບັນດາລາຍການໃຊ້ຈ່າຍ ແລະ ຊົມໃຊ້ ນັ້ນ ມັນອາດເປັນການໃຊ້ຈ່າຍ/ຊື້/ຂາຍເງິນສົດ ຫຼື ຜະລິດຕະພັນຂອງຕົນເອງເປັນວັດຖຸ ຫຼືເປັນການແລກປ່ຽນ ຫົວໜ້າຄົວເຮືອນຕ້ອງໄດ້ຂີດວົງມົນອ້ອມລະຫັດ 1, 2 ຫຼື 3 ຕາມຄວາມຈິງ. ພ້ອມກັນກໍ່ຕ້ອງໝາຍໃຫ້ຈະແຈ້ງ ວ່າສິ່ງເຫລົ່ານັ້ນມີຈຸດປະສົງເອົາໄປເຮັດຫັຍງ (ກະສິກຳ, ຄົວເຮືອນ, ຂາຍ/ທຸລະກິດ)ພຽງແຕ່ທ່ານຂີດວົງມົນອ້ອມລະຫັດຄຳຕອບທີ່ຖືກຕ້ອງ ( 1, 2 ຫລື 3 ) ຕາມລຳດັບ

ນັກເດີນສຳຫລວດຈະເປັນຜູ້ໃສ່ລະຫັດສຳລັບບັນດາລາຍການເຫຼົ່ານັ້ນ ໂດຍອີງໃສ່ບັນຊີລະຫັດຕ່າງໆທີ່ຕິດຄັດຢູ່ໃນຄູ່ມືນີ້. ການໃສ່ຫັດນັກເດີນສຳຫລວດຕ້ອງເບິ່ງໃຫ້ລະອຽດວ່າການພົວພັນທີ່ມາ(ການໃຊ້ຈ່າຍ/ຊົມໃຊ້ ແລະທີ່ໄປ (ຈຸດປະສົງ) ສອດຄ່ອງກັນແລ້ວບໍ່ ທ່ານຈຶ່ງສາມາດແຍກກຸ່ມຂອງລະຫັດໄດ້ງ່າຍ

ໃນພຶດຕິກຳຕົວຈິງ ສຳຫລັບການຊົມໃຊ້ຜະລິດຕະພັນຂອງຕົນເອງມີຄວາມຫຍຸ້ງຍາກ, ເພາະມີບັນຫາດ້ານລາຄາ, ກ່ຽວກັບຂໍ້ມູນດ້ານລາຄາ ທ່ານສາມາດເລືອກ ແລະນຳໃຊ້ລາຄາຢູ່ໃນທ້ອງຖິ່ນນັ້ນ ຫຼື ຢູຕະຫລາດທີ່ໄກ້ຄຽງສຸດ

-ກໍລະນີຄົວເຮືອນທີ່ບໍ່ສາມາດຂຽນໜັງສືໄດ້, ນັກເດີນສຳຫລວດຈະຕ້ອງໄດ້ໄປຫາຄົວເຮືອນທຸກມື້ ເພື່ອຕິດຕາມ ແລະຈົດກ່າຍຂໍ້ມູນລະອຽດຈາກຄົວຕາມແຕ່ລະຂັ້ນຕອນພ້ອມໃຊ້ລະຫັດເລີຍ.

ນັກເດີນສຳຫລວດຕ້ອງລົງໄປຢ້ຽມຢາມບັນດາຄົວເຮືອນຕົວແທນທີ່ເລືອກໄດ້ ແລະຊ່ວຍເຫຼືອເຂົາເຈົ້າໃນການຈົດກ່າຍ ພ້ອມໃຊ້ລະຫັດລາຍການໃນແຕ່ລະວັນ, ຖ້າປະໄວ້ດົນບາງທີຂໍ້ມູນອາດຈະຫລາຍເຮັດໃຫ້ການໃສ່ລະຫັດຊັກຊ້າລົງ ຫລືບໍ່ທັນ ແລະບາງກໍລະນີຄົວເຮືອນຈົດກ່າຍບໍ່ແຈ້ງຖ້າທ່ານບໍ່ຖາມຊ້ອງໜ້າຄົວເຮືອນໂດຍກົງອາດຈະເຮັດໃຫ້ພົບຄວາມຫຍຸງຍາກໃນການໃສ່ລະຫັດ.

ຮູບແບບຂອງຕາຕະລາງ

ຕາຕະລາງປະກອບມີ 8 ຊ່ອງ

+ ຊ່ອງທີ1: ວັນທີ (ທຸກສິ່ງທີ່ເກີດຂຶ້ນແມ່ນໄດ້ແຍກແຕ່ລະວັນ)

+ ຊ່ອງທີ 2: ລຳດັບບຸກຄົນຈາກແບບສອບຖາມພາກທີI, ເພື່ອຢາກຕິດຕາມວ່າທຸກຄົນໃນຄົວເຮືອນໃຊ້ຈ່າຍໄດ້ບັນທຶກເຂົ້າໝົດບໍ່

+ ຊ່ອງທີ 3: ລາຍການ (ສຳຫລັບຈົດກ່າຍສິ່ງທີ່ໄດ້ຊື້/ຈ່າຍ, ຊົມໃຊ້...)

+ ຊ່ອງທີ 4: ຫົວໜ່ວຍ(ສຳຫລັບບັນທຶກເປັນກິໂລ, ລິດ, ມັດ... ຫົວໜ່ວຍທ້ອງຖິ່ນ

+ ຊ່ອງທີ 5: ຈຳນວນ (ເພື່ອບັນທຶກຈຳນວນທີ່ໄດ້ຊື້, ຊົມໃຊ້...)

+ ຊ່ອງທີ 6: ມູນຄ່າ(ທຸກໆລາຍການແມ່ນຈະຕີມາເປັນມູນຄ່າກີບ)

+ ຊ່ອງທີ 7: ໃຊ້ຈ່າຍ/ຊົມໃຊ້

ເລກ 1 ແມ່ນຊື້/ຈ່າຍ/ຂາຍ ເປັນເງິນສົດ

ເລກ 2 ແມ່ນ ຜະລິດຕະພັນຂອງຕົນເອງ/ ວັດຖຸ

ເລກ 3 ແມ່ນ ແລກປ່ຽນ (ຜະລິດຕະພັນຕົນເອງເອົາໄປແລກປ່ຽນ)

+ ຊ່ອງທີ 8: ຈຸດປະສົງ

ເລກ 1 ແມ່ນ ກະສິກຳ

ເລກ2 ແມ່ນ ຄົວເຮືອນ

ເລກ 3 ແມ່ນຂາຍ/ທຸລະກິດ

ຊ່ອງ 9: ລະຫັດລາຍການ (ແມ່ນມີລະຫັດສະເພາະຕິດຄັດກັບປຶ້ມຄູ່ມືນີ້)

ຈະບັນທຶກອັນໃດ

- ຊື້ມາຊົມໃຊ້ທັງໝົດ ແມ່ນຈົດເຂົ້າໃນການໃຊ້ຈ່າຍ, ບັນທຶກ ລາຍຮັບ ແລະ ການຊົມໃຊ້ທັງໝົດ ຂອງຜະລິດຕະພັນທີ່ເກີດຂື້ນໃນຮອບ15 ວັນ
- ການບັນທຶກຫົວໜ່ວຍ ແມ່ນເປັນ (ກິໂລກຣາມ, ລິດ, ມັດ, ກ້ອນ, ຖົງ ...), ສ່ວນເຂົ້າ ຕ້ອງແມ່ນຄິດໄລ່ເປັນກິໂລກຣາມ
- ຈຳນວນຕ້ອງໄດ້ຂຽນລະອຽດໃຫ້ກົງກັນກັບຫົວໜ່ວຍແຕ່ລະຂອງລາຍການ
- ບັນທຶກມູນຄ່າທັງໝົດຂອງການຊື້/ຂາຍ, ຊົມໃຊ້ຜະລິດຕະພັນຂອງຕົນເອງ ແລະແລກປ່ຽນ
- ບໍ່ນັບພາສີ ຖ້າຊື້ຢູ່ຕ່າງປະເທດ
- ບັນທຶກການມອບໃຫ້
- ທັງໝົດການຊື້ ຂາຍ ແມ່ນໄດ້ແບ່ງອອກເປັນສາມໝວດຄື: (1) ສໍາຫລັບການຊົມໃຊ້ຄົວເຮືອນ, (2) ສໍາຫລັບກະສິກໍາ, (3) ສໍາຫລັບຂາຍ/ທຸລະກິດ.
- ໃຊ້ຈ່າຍເຂົ້າໃນການຜະລິດ ແລະການຄ້າ
- ບັນທຶກການລົງທຶນ ແລະຊື້ເຄື່ອງໃຊ້ຍາວນານ
- ການບັນທຶກລາຍຮັບທັງໝົດໃນການຂາຍ/ທຸລະກິດ
- ບັນທຶກລາຍຮັບທັງໝົດຂອງຄົວເຮືອນ ( ຄ່າຈ້າງ, ຂອງຂັວນ ແລະ ອື່ນໆ) ເປັນທັງເງິນສົດ ແລະ ວັດຖຸ
- ສໍາຫລັບການຊື້ສິນເຊື່ອ, ແມ່ນບັນທຶກເອົາຈໍານວນມູນຄ່າທັງໝົດ ທີ່ໄດ້ມອບຮັບໃນເດືອນນັ້ນ
- ສໍາຫລັບການສໍາລະ, ບັນທຶກເອົາພຽງດອກເບັ້ຍເທົ່ານັ້ນ

ລະຫັດລາຍການ

ລະຫັດລາຍການປະກອບມີ 4 ໝວດໃຫ່ຍ:

ໝວດທີ1: ໃຊ້ຈ່າຍ-ຊົມໃຊ້ຄົວເຮືອນ (ລວມມີປະເພດອາຫານ ແລະບໍ່ແມ່ນອາຫານ)

ໝວດທີ 2: ການໃຊ້ຈ່າຍເພື່ອການຜະລິດ ແລະການຄ້າ (ລວມມີຄ່າສິ້ນເປືອງສໍາຫັລບການກະສິກໍາ ແລະເພື່ອທຸລະກິດ)

ໝວດທີ 3: ການລົງທຶນ ເຄື່ອງໃຊ້ຍາວນານ (ລວມມີເຄື່ອງໃຊ້ຍາວນານສຳຫລັບຊົມໃຊ້ໃນຄົວເຮືອນ, ການລົງທຶນໃນກະສິກຳ, ການລົງທຶນໃນທຸລະກິດ)

ໝວດທີ 4: ລາຍຮັບ (ລວມມີລາຍຮັບຈາກການຂາຍຜົນຜະລິດກະສິກຳ ແລະລາຍຮັບຈາກການດຳເນີນທຸລະກິດ)

ການຈົດກ່າຍ

1. ການຊົມໃຊ້ໃນຄົວເຮືອນ

   ປະກອບມີການຈ່າຍ/ຊື້, ຊົມໃຊ້ຜະລິດຕະພັນຂອງຕົນເອງ ແລະແລກປ່ຽນ ເຊັ່ນວ່າ: ຊື້ຊີ້ນມາກິນ, ກິນເຂົ້າສານໜຽວຕົນເອງ, ເອົາເຂົ້າໜຽວຕົນເອງປ່ຽນໄກ່ມາກິນ..., ລະຫັດລາຍການແມ່ນຄືກັນຕ່າງແຕ່ທີ່ມາຊື້ ຫລືຜະລິດເອງ (ລະຫັດລາຍການແມ່ນໝວດ1:ການໃຊ້ຈ່າຍ-ຊົມໃຊ້ຄົວເຮືອນແມ່ນ), ຖ້າເອົາເຄື່ອງທີ່ຕົນເອງຂາຍມາກິນແມ່ນໃຫ້ຖືວ່າຄືກັບການຊື້ມາຊົມໃຊ້ຄົວເຮືອນ, ຊຶ່ງແມ່ນລະຫັດ 507

   ຕົວຢ່າງ:

| ***ວັນທີ*** | ລ/ດ ບຸກຄົນຈາກ ບ/ຖ ຄ/ຮ | ລາຍການ | ຫົວໜ່ວຍ | ຈຳນວນ | ມູນຄ່າ | ການໃຊ້ຈ່າຍ/ຊົມໃຊ້<br>*1= ຈ່າຍ/ຊື້/ຂາຍ(ໄດ້ສິດ)*<br>*2=ຜະລິດຕະພັນຂອງຕົນເອງ*<br>*3=ແລກປ່ຽນ* | ຈຸດປະສົງ<br>*1=ກະສິກຳ*<br>*2=ຄົວເຮືອນ*<br>*3=ຂາຍ/ທຸລະກິດ* | ລະຫັດລາຍການ |
|---|---|---|---|---|---|---|---|---|
| 16 | 1 | ຊື້ເຂົ້າສານຈ້າວມາກິນ | ກິໂລ | 2 | 7000 | (1) 2 3 | 1 (2) 3 | 2 |
| 16 | 2 | ມ່າເຂົ້າສານໜຽວຕົນເອງ | ກິໂລ | 1 | 2000 | 1 (2) 3 | 1 (2) 3 | 1 |
| 16 | 2 | ຂ້າໄກ່ຕົນເອງກິນ | ໂຕ | 1 | 20000 | 1 (2) 3 | 1 (2) 3 | 14 |
| 17 | 1 | ເອົາໄກ່ຕົນເອງປ່ຽນສິ້ງມານຸ່ງ | ໂຕ | 2 | 40000 | 1 2 (3) | 1 (2) 3 | 14 |
| 17 | 3 | ລູກຊາຍເອົາໝີ່ຢູ່ຮ້ານມາກິນ | ຫໍ່ | 2 | 2000 | (1) 2 3 | 1 (2) 3 | 7 |

ການໃຊ້ຈ່າຍໃນການຜະລິດ ແລະການຄ້າ/ທຸລະກິດ

ປະກອບມີການຊື້, ຊົມໃຊ້ຜະລິດຕະພັນຂອງຕົນເອງ, ແລກປ່ຽນເພື່ອມາໃຊ້ຈ່າຍເຂົ້າໃນການດຳເນີນກິດຈະກຳໃດໜຶ່ງ, ເຊັ່ນ ຊື້ຫົວອາຫານສັດ, ຊື້ຢາຂ້າສັດຕູພືດ, ເອົາສິ່ງຂອງຕົນເອງໄປປ່ຽນເພື່ອມາໃຊ້ເຂົ້າໃນການກະສິກຳ ຫລືທຸລະກິດ, ຊື້ເຄື່ອງຂອງມາຂາຍ, ຊື້ວັດຖຸດິບມາປຸງແຕ່ງອາຫານ ຫລືເອົາສິນຄ້າທີ່ເພື່ອຂາຍມານຳໃຊ້ເຂົ້າໃນກິດຈະກຳການຜະລິດອື່ນຕົວຢ່າງ: ເອົາຫົວອາຫານໄກ່ທີ່ຂາຍມາເກືອໄກ່, ລະຫັດລາຍການແມ່ນໝວດ 2: ການໃຊຈ່າຍເຂົ້າໃນການຜະລິດ ແລະການຄ້າ/ທຸລະກິດ.

ຕົວຢ່າງ:

| *ວັນທີ* | ລ/ດ ບຸກຄົນ ຈາກ ບ/ຖ ຄ/ຮ | ລາຍການ | ຫົວໜ່ວຍ | ຈຳນວນ | ມູນຄ່າ | ການໃຊ້ຈ່າຍ/ຊົມໃຊ້ *1= ຈ່າຍ/ຊື້/ຂາຍ(ງິນສົດ) 2=ຜະລິດຕະພັນຂອງຕົນເອງ 3=ແລກປ່ຽນ* | ຈຸດປະສົງ *1=ກະສິກຳ 2=ຄົວເຮືອນ 3=ຂາຍ/ທຸລະກິດ* | ລະຫັດລາຍການ |
|---|---|---|---|---|---|---|---|---|
| 16 | 1 | ຊື້ເຂົ້າເປືອກໜຽວມາເຮັດແນວ | ກິໂລ | 50 | 50000 | (1) 2 3 | (1) 2 3 | 724 |
| 16 | 2 | ເອົາເຂົ້າເປືອກໜຽວຕົນເອງເກືອໄກ່ | ກິໂລ | 0,2 | 500 | 1 (2) 3 | (1) 2 3 | 724 |
| 16 | 2 | ເອົາເຂົ້າສານໜຽວຕົນເອງແລກໄກ່ມາລ້ຽງເພື່ອຂາຍ | ກິໂລ | 50 | 100000 | 1 2 ( 3) | (1) 2 3 | 723 |
| 19 | 1 | ຊື້ເຄື່ອງເຂົ້າຮ້ານ | | | 1000000 | (1) 2 3 | 1 2 (3) | 552 |
| 20 | 2 | ເອົາເຂົ້າເປືອກໜຽວຕົນເອງແລກເກືອມາຂາຍ | ກິໂລ | 100 | 100000 | 1 2 ( 3) | 1 2 (3) | 724 |
| 22 | 2 | ເອົາຫົວອາຫານຢູ່ຮ້ານມາເກືອໄກ່ | ກິໂລ | 1 | 4000 | (1) 2 3 | (1) 2 3 | 454 |
| 24 | 3 | ເອົາເຂົ້າສານຈ້າວຕົນເອງມາເຮັດເຂົ້າປຸ້ນຂາຍ | ກິໂລ | 5 | 13500 | 1 ( 2) 3 | 1 2 (3) | 725 |

## <u>ການລົງທຶນ ແລະເຄື່ອງໃຊ້ຍາວນານ</u>

ປະກອບມີການຊື້, ແລກປ່ຽນເພື່ອມາລົງທຶນ ຫລື ເປັນເຄື່ອງຊົມໃຊ້ຍາວນານຈຸດປະສົງໃນຄົວເຮືອນ ຫລືການກະສິກຳ ຫຼື ການທຸລະກິດເຊັ່ນ: ຊື້ຈັກຫຍິບມາຍິບເຄື່ອງນຸ່ງຢູ່ເຮືອນ, ຊື້ລົດໄຖນາ, ຊື້ລົດຈຳໂປ໊ມາແລ່ນຄົວ.... ຊຶ່ງລະຫັດລາຍການແມ່ນຢູ່ໝວດ 3, ແຕ່ສິ່ງສຳຄັນເວລາສອບຖາມຕົວຈິງຕ້ອງເອົາໃຈໃສ່ຖາມກ່ຽວກັບຈຸດປະສົງທີ່ຈະເອົາໄປນຳໃຊ້ເພາະວັດຖຸໜຶ່ງສາມາດນຳໃຊ້ໄດ້ທັງສາມຈຸດປະສົງ ແຕ່ຕ້ອງຖືເອົາໂຕຕົ້ນຕໍ

- ຖ້າສະມາຊິກຂອງຄົວເຮືອນໄດ້ຊື້ຣົດຕຸກ - ຕຸກມາເພື່ອໃຊ້ເປັນທຸລະກິດການຂົນສົ່ງ ມັນຈະໄດ້ຈົດເຂົ້າໃນການລົງທຶນທາງທຸລະກິດ, ແຕ່ຖ້າລົດຄັນດັ່ງກ່າວແມ່ນໃຊ້ເພື່ອຄົວເຮືອນທົ່ວໄປແມ່ນຖືວ່າເປັນເຄື່ອງໃຊ້ຍາວນານຂອງຄົວເຮືອນ.

-ຖ້າຊື້ໝູແມ່ພັນມາລ້ຽງເພື່ອເອົາແນວ ອັນນີ້ຖືວ່າແມ່ນການລົງທຶນໃນການກະສິກຳ, ແຕກົງກັນຂ້າມຊື້ມາເພື່ອຂ້າກິນແມ່ນການຊົມໃຊ້, ຊື້ມາເພື່ອລ້ຽງແລ້ວຂາຍແມ່ນການໃຊ້ຈ່າຍໃນແງ່ການກະສິກຳ

-ຖ້າເອົາສີມັງຈາກຮ້ານຂາຍຂອງຕົນເອງ    ມາປຸກສ້າງຄອກໝູ,ໃນກໍລະນີມູນຄ່າສີມັງຫາກລຸດ1ລ້ານກີບລົງມາແມ່ນຈະຕົກຢູ່ໃນໝວດ2.ໃນກໍລະນີມູນຄ່າສີມັງເທົ່າຫລືຫລາຍກວ່າ1ລ້ານແມ່ນຈັດເຂົ້າໃນໝວດ3.

ຕົວຢ່າງ:

| *ວັນທີ* | ລ/ດ ບຸກຄົນຈາກບ/ຖຄ/ຮ | ລາຍການ | ຫົວໜ່ວຍ | ຈຳນວນ | ມູນຄ່າ | ການໃຊ້ຈ່າຍ/ຊົມໃຊ້<br>*1= ຈ່າຍ/ຊື້/ຂາຍ(ງິສົດ)*<br>*2=ຜະລິດຕະພັນຂອງຕົນເອງ*<br>*3=ແລກປ່ຽນ* | ຈຸດປະສົງ<br>*1=ກະສິກຳ*<br>*2=ຄົວເຮືອນ*<br>*3=ຂາຍ/ທຸລະກິດ* | ລະຫັດລາຍການ |
|---|---|---|---|---|---|---|---|---|
| 16 | 1 | ຊື້ລົດຕຸກໆ ມາແລ່ນ ຄົວ | ຄັນ | 1 | 25,000,000 | (1) 2 3 | 1 2 (3) | 269 |
| 20 | 3 | ຊື້ລົດຕຸກໆໃຊ້ຄົວເຮືອນ | ຄັນ | 1 | 25,000,000 | (1) 2 3 | 1 (2) 3 | 269 |
| 23 | 2 | ຊື້ໝູແມ່ມາເຮັດແນວ | ໂຕ | 1 | 500,000 | (1) 2 3 | (1) 2 3 | 735 |
| 23 | 1 | ເອົາຊີມັງຈາກຮ້ານຂອງຕົນເອງຂາຍ ມາເຮັດຄອກໄກ່ພັນ | ເປົາ | 3 | 105000 | (1) 2 3 | (1) 2 3 | 737? |
| 24 | 2 | ເອົາເຂົ້າເປືອກໝຽວຕົນເອງແລກເຮືອຫາປາ | ກິໂລ | 1000 | 1000000 | 1 2 ( 3) | (1) 2 3 | 272 |
| | | | | | | | | |

<u>ລາຍຮັບ</u>

ລວມມີການຂາຍຜົນຜະລິດກະສິກຳຂອງຕົນເອງ, ສິ່ງທີ່ຫາມາໄດ້, ຈາກການຊື້, ແລກປ່ຽນ ແລະການບໍລິການ ເຊັ່ນ: ຂາຍເຂົ້າໝຽວຕົນເອງປູກ, ຂາຍປາຫາເອງ, ຂາຍເຄື່ອງທີ່ເອົາຜົນຜະລິດຕົນເອງແລກປ່ຽນ, ຂາຍເຄື່ອງທີ່ຊື້ມາ, ຂາຍເຂົ້າປຸ້ນເຮັດເອງ, ໄດ້ເງິນຈາກການຕັດຜົມ... ລະຫັດລາຍການຈະແມ່ນໝວດ 4.

ຕົວຢ່າງ:

| *ວັນທີ* | ລ/ດ ບຸກຄົນຈາກບ/ຖຄ/ຮ | ລາຍການ | ຫົວໜ່ວຍ | ຈຳນວນ | ມູນຄ່າ | ການໃຊ້ຈ່າຍ/ຊົມໃຊ້<br>*1= ຈ່າຍ/ຊື້/ຂາຍ(ງິສົດ)*<br>*2=ຜະລິດຕະພັນຂອງຕົນເອງ*<br>*3=ແລກປ່ຽນ* | ຈຸດປະສົງ<br>*1=ກະສິກຳ*<br>*2=ຄົວເຮືອນ*<br>*3=ຂາຍ/ທຸລະກິດ* | ລະຫັດລາຍການ |
|---|---|---|---|---|---|---|---|---|
| 16 | 1 | ຂາຍເຄື່ອງຢູ່ຮ້ານໄດ້ | | | 200000 | (1) 2 3 | 1 2 (3) | 501 |
| 16 | 2 | ຂາຍສິ້ນຕ່ຳເອງ | ຜືນ | 1 | 50000 | 1 (2) 3 | 1 2 (3) | 502 |

| | | | | | | | | |
|---|---|---|---|---|---|---|---|---|
| 17 | 2 | ຂາຍໝນ້ອຍູລ້ຽງເອງ | ໂຕ | 2 | 100,000 | 1 ( 2) 3 | 1 2 (3) | 411 |
| 17 | 2 | ຂາຍໄກ່ຊື້ມາ | ໂຕ | 3 | 60000 | (1) 2 3 | 1 2 (3) | 501 |
| 18 | 2 | ຂາຍເກືອທີ່ແລກມາ | ກິໂລ | 10 | 10000 | (1) 2 3 | 1 2 (3) | 501 |
| | | | | | | | | |

**ການບັນທຶກຂອງການຮັບ ແລະ ການເອົາໃຫ້**

ສຳຫລັບໄດ້ຮັບສິ່ງຂອງຈາກຄົນອື່ນແມ່ນໃຫ້ຈົດຄືກັບການຊົມໃຊ້, ຊຶ່ງລະຫັດແມ່ນຢູ່ໃນໝວດ1: ການໃຊ້ຈ່າຍ-ຊົມໃຊ້ຄົວເຮືອນ

ສຳຫລັບໄດ້ຮັບເງິນສົດຈາກຄົນອື່ນແມ່ນໃຫ້ຈົດລະອຽດໃສ່ຕາຕະລາງນີ້ເຊັ່ນດຽວກັນແຕ່ລະຫັດແມ່ນໃຫ້ ຈາກແບບສອບຖາມຄົວເຮືອນພາກ 6: ລາຍຮັບ ແລະ ການໂອນ. ໃນມື້ສຸດທ້າຍຂອງການສຳຫລວດນັກເດີນສຳຫລວດຕ້ອງສັງລວມມູນຄ່າຕ່າງໆໃນແຕ່ລະລາຍການແລ້ວບັນທຶກເຂົ້າແຕລະລາຍການໃນພາກ 6ແບບສອບຖາມຄົວເຮືອນ ແລ້ວຢູ່ໃນຕາຕະລາງບັນທຶກປະຈຳວັນນີ້ຕ້ອງຂີດຂ້າຖິ້ມ

ສຳຫລັບສິ່ງຂອງ, ເງິນສົດທີ່ເຮົາໃຫ້ຄົນອື່ນໄປແມ່ນໃຫ້ບັນທຶກຄືກັບການຈ່າຍ ຫລືຊົມໃຊ້

ຕົວຢ່າງ:

| *ວັນທີ* | ລ/ດ ບຸກຄົນ ຈາກ ບ/ຖ ຄ/ຮ | ລາຍການ | ຫົວໜ່ວຍ | ຈຳນວນ | ມູນຄ່າ | ການໃຊ້ຈ່າຍ/ຊົມໃຊ້ ***1= ຈ່າຍ/ຊື້/ຂາຍ(ງິສົດ)*** ***2=ຜະລິດຕະພັນຂອງຕົນເອງ*** ***3=ແລກປ່ຽນ*** | ຈຸດປະສົງ *1=ກະສິກຳ* *2=ຄົວເຮືອນ* *3=ຂາຍ/ທຸລະກິດ* | ລະຫັດລາຍການ |
|---|---|---|---|---|---|---|---|---|
| 16 | 1 | ນ້ອງຊາຍຝາກເງິນມາໃຫ້ | | | 50000 | (1) 2 3 | 1 (2) 3 | 805 |
| 16 | 2 | ຮັບເງິນຈາກພໍ່ຢູ່ຕ/ທ | | | 950000 | (1) 2 3 | 1 (2) 3 | 806 |
| 17 | 2 | ເຂົ້າສານໜຽວຂອງຕົນເອງໃຫ້ພີ່ນ້ອງ | ກລ | 5 | 10000 | 1 (2) 3 | 1 (2) 3 | 1 |
| 17 | 3 | ໄດ້ຮັບເຂົ້າສານຈ້າວຈາກໝູ່ | ກລ | 10 | 35000 | (1) 2 3 | 1 (2) 3 | 2 |
| 18 | 2 | ເອົາເງິນ ໃຫ້ໝູ່ | | | 30.000 | (1) 2 3 | 1 (2) 3 | 357 |
| 20 | 1 | ອ້າຍເອົາລົດໄຖນາໃຫ້ | ຄັນ | 1 | 100000000 | (1) 2 3 | 1 (2) 3 | 354 |

## 6. ວິທີຈົດກ່າຍແບບສອບຖາມສໍາລັບຄົວເຮືອນ.

- <u>ໜ້າປົກ</u> :

**<u>ລະຫັດທີ່ຕັ້ງ</u>** :

**ແຂວງ:** ໃຫ້ຂຽນຊື່ ແຂວງ ແລະ ໃສ່ລະຫັດແຂວງຕາມບັນຊີທີ່ ສູນສະຖິຕິໄດ້ກໍານົດ ໃຫ້.

**ເມືອງ:** ໃຫ້ຂຽນຊື່ ເມືອງ ແລະໃສ່ລະຫັດເມືອງຕາມບັນຊີທີ່ ສູນສະຖິຕິໄດ້ກໍານົດ ໃຫ້.

**ບ້ານ:** ໃຫ້ຂຽນຊື່ ບ້ານ ແລະໃສ່ລະຫັດບ້ານຕາມບັນຊີທີ່ ສູນສະຖິຕິໄດ້ກໍານົດ ໃຫ້.

**ເລກທີ່ຄົວເຮືອນ:** ແມ່ນໝາຍເຖິງເລກທີ່**ຄົວເຮືອນ**ຕົວແທນຊຶ່ງນັກເດີນສໍາຫລວດໄດ້ຄັດເລືອກ ໂດຍໃຊ້ວິທີການເລືອກຕົວແທນ ຕາມການແນະນໍາຂອງ ສູນສະຖິຕິແຫ່ງຊາດ, ຕາມປົກກະຕິແລ້ວບ້ານໜຶ່ງຈະມີ**ຄົວເຮືອນ**ຕົວແທນບໍ່ກາຍ10 ຄົວເຮືອນ, ສະນັ້ນ ເລກລໍາດັບ**ຄົວເຮືອນ**ສູງສຸດຈະມີແຕ່ 01-10 ເທົ່ານັ້ນ.

**ເຂດສໍາຫລວດ:** ຈະມີ 3 ປະເພດເຂດສໍາຫລວດ, ເຂດຕົວເມືອງ(1), ຊົນນະບົດມີທົນທາງ(2) ແລະຊົນະບົດບໍ່ມີທົນທາງ, ລະອຽດໃຫ້ອີງໃສ່ນິຍາມ ໃນປຶ້ມຄູ່ມື.

**ວັນທີ່ສໍາພາດ:** ໃຫ້ຂຽນວັນທີ່ ເລີ້ມຕົ້ນສໍາພາດເທື່ອທໍາອິດ.

**ເດືອນສໍາພາດ:** ໃຫ້ຂຽນເດືອນທີ່ທ່ານກໍາລັງປະຕິບັດການສໍາຫລວດຢູ່.

**ຊື່ຜູ້ຖືກສໍາພາດ:** ໃຫ້ຂຽນຊື່ຜູ້ທີ່ທ່ານສໍາພາດ, ຜູ້ທີ່ຖືກສໍາພາດຈະຕ້ອງແມ່ນຫົວໜ້າ**ຄົວເຮືອນ** ຫລືຜູ້ໃຫຍ່ທີ່ກໍາສະພາບຂອງ**ຄົວເຮືອນ**ໄດ້ ແລະສາມາດໃຫ້ຂໍ້ມູນຕ່າງໆ ກ່ຽວກັບຄົວເຮືອນໄດ້ຢ່າງຊັດເຈນ.

**ຊື່ນັກເດີນສໍາຫຼວດ:** ໃຫ້ຂຽນຊື່ຂອງທ່ານ ໃນເວລາທ່ານສໍາພາດຄັ້ງທໍາອິດ.

ສໍາລັບຊື່ນັກກວດກາຢູ່ພາກສະໜາມ ແລະນັກກວດກາຢູ່ຫ້ອງການ, ນັກກວດກາຈະເປັນຜູ້ຂຽນໃສ່ເອງໃນເວລາເຂົາເຈົ້າກວດກາແບບສອບຖາມ.

### *ພາກທີ່ I: ຄຸນລັກສະນະຂອງຄົວເຮືອນ.*

ໃຫ້ຂຽນຊື່ຂອງສະມາຊິກທີ່ຢູ່ເປັນປົກກະຕິໃນ**ຄົວເຮືອນ**, ການຂຽນຊື່ແມ່ນໃຫ້ເລີ້ມຕົ້ນດ້ວຍຫົວໜ້າ**ຄົວເຮືອນ**ກ່ອນ ຫລັງຈາກນັ້ນໃຫ້ຂຽນຊື່ເມຍ/ຜົວ ຂອງຫົວໜ້າ**ຄົວເຮືອນ**, ຖັດມາໃຫ້ຂຽນຊື່ຜູ້ທີ່ມີອາຍຸຫລາຍກ່ອນ ແລະນ້ອຍລົງຕາມລໍາດັບຕໍ່ໆໄປ.

**ເລກລໍາດັບ1:** ໃຫ້ຂຽນເລກລໍາດັບຂອງສະມາຊິກທີ່ຢູ່ເປັນປົກກະຕິໃນ**ຄົວເຮືອນ** 1, 2, 3, ...

ຂຽນລາຍຊື່ສະມາຊິກທີ່ຢູ່ເປັນປົກກະຕິໃນຄົວເຮືອນ ໃຫ້ຂຽນຊື່ຫົວໜ້າຄົວເຮືອນກ່ອນ ແລະ ເປັນລຳດັບແຕ່ຜູ້ໃຫຍ່ຫາຜູ້ນ້ອຍ.

**ຄຳຖາມ 2:** ເພດ ?

**ໃຫ້ທ່ານຂີດວົງອ້ອມເອົາລະຫັດ 1 ຖ້າແມ່ນເພດຊາຍ ແລະອ້ອມລະຫັດ 2 ຖ້າແມ່ນເພດຍິງ.**

**ຄຳຖາມ3:** ປັດຈຸບັນທ່ານອາຍຸໄດ້ຈັກປີ ?

**ໃຫ້ຂຽນອາຍຸເຕັມ, ຖ້າອາຍຸຕ່ຳກວ່າ 1 ປີ ໃຫ້ຂຽນ "00"999**

**ຄຳຖາມ4:** ກິດຈະກຳຕົ້ນຕໍປະຈຸບັນຂອງທ່ານແມ່ນຫຍັງ? ໝາຍເຖິງກິດຈະກຳທີ່ໄດ້ເຮັດໃນປະຈຸບັນນີ້, ຖ້າຫາກມີຫລາຍກິດຈະກຳທີ່ເຮັດໃຫ້ຖືເອົາໂຕຕົ້ນຕໍກວ່າໝູ່ ຕົວຢ່າງ:ທ້າວ ພູພັດ ລາວເປັນພະນັກງານ ຢູ່ສູນສະຖິຕິແຫ່ງຊາດ,ເວລາເລີກການລາວຂາຍເຄື່ອງຊ່ວຍຄອບຄົວທຸກມື້ ພໍ ເຖິງລະດູການຜະລິດລາວໄປເຮັດນາ.ໝາຍຄວາມວ່າກິດຈະກຳຕົ້ນຕໍຂອງລາວແມ່ນນັກວິຊາການສະຖິຕິ ຂໍ້ຫ້າມ; ຫ້າມນັກເດີນສຳຫລວດຂຽນກິດຈະກຳບໍ່ລະອຽດເຊັ່ນ: ການຄ້າ, ບໍລິການ...

## *ພາກທີ II : ກິດຈະກຳກໍ່ສ້າງໃນ 12 ເດືອນຜ່ານມາ*

ກ. ສຳຫລັບພາກນີ້ແມ່ນຈະຖາມເຖິງກິດຈະກຳການກໍ່ສ້າງຕ່າງໆທີ່ຄົວເຮືອນນີ້ໄດ້ດຳເນີນໃນໄລຍະ 1ປີຜ່ານມາ, ນັບທັງການກໍ່ສ້າງໃໝ່ ແລະ ຂະຫຍາຍ,ຢາກຮູ້ເຖິງແຮງງານ, ຄ່າຈ້າງ ແລະ ມູນຄ່າການກໍ່ສ້າງ.(ຖ້າມີຂີດວົງອ້ອມເອົາເລກ 1, ຖ້າບໍ່ມີຂີດວົງອ້ອມເອົາເລກ 2 ແລ້ວຂ້າມໄປພາກ

## ພາກການກໍ່ສ້າງໃໝ່ ຫລື ຂະຫຍາຍເຮືອນ

ຄຳຖາມ1: ຈຳນວນແຮງງານຕົ້ນຕໍທີ່ໄດ້ປະກອບສ່ວນເຂົ້າໃນການກໍ່ສ້າງນີ້ມີຈັກຄົນ? *(ລວມທັງສະມາຊິກຄົວເຮືອນຂອງທ່ານ).*

ໃຫ້ກຳນົດເອົາພຽງ 12 ເດືອນຜ່ານມາ. ຕົວຢ່າງ:ທ້າວ ໄຊຊະນະ ໄດ້ປຸກເຮືອນແຕ່ປີ 2001 ຍັງບໍ່ທັນແລ້ວລາວຢຸດເຊົາ, ຮອດເດືອນ 1 ຕົ້ນປີ 2005 ລາວເລີ້ມຕົ້ນສືບຕໍ່ປຸກສ້າງກໍແມ່ນໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດຈຳນວນແຮງງານຕົວຈິງ.

ຄຳຖາມ2: ຄຳຖາມ 2 ນີ້ເພື່ອຊອກຮູ້ອັດຕາຄ່າຈ້າງແຮງງານຈັກກີບຕໍ່ຫົວຄົນ? ສຳຫລັບຄົວເຮືອນທີ່ໄດ້ຈ້າງຄ່າແຮງງານ, ກໍລະນີບໍ່ໄດ້ຈ້າງແມ່ນຂຽນ 0

ຄຳຖາມ3: ໃນ 12 ເດືອນຜ່ານມາມູນຄ່າວັດສະດຸກໍ່ສ້າງທີ່ໄດ້ໃຊ້ທັງໝົດຫລາຍປານໃດ?(ຊຶ່ງບໍ່ລວມເອົາຄ່າແຮງງານ)

ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ.

ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດເທົ່ານັ້ນ.ເຖິງແມ່ນວ່າມູນຄ່າການກໍ່ສ້າງຈະຈ່າຍໄປໃນແຕ່ລະປີຜ່ານມາແລ້ວກໍຕາມບໍ່ໃຫ້ຈົດເອົາ.*ກໍລະນີແຍກບໍ່ໄດ້ແມ່ນໃຫ້ປະເປົ່າຫວ່າງບໍ່ຕ້ອງຂຽນຫັຍງໃສ່*

ຖ້າວັດສະດຸທີ່ຊື້ມາແຕ່ບໍ່ທັນໄດ້ນຳໃຊ້ແມ່ນບໍ່ລວມເຂົ້າ, ແມ່ນໃຫ້ມູນຄ່າຕົວຈິງທີ່ໄດ້ນຳໃຊ້ເຂົ້າໃນການກໍ່ສ້າງໃນຊ່ວງ 12ເດືອນ

ຄຳຖາມ4: ໃນ 12 ເດືອນຜ່ານມາທ່ານໄດ້ໄຊ້ຈ່າຍຄ່າແຮງງານທັງໝົດຫລາຍປານໃດ? ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດເທົ່ານັ້ນ. ເຖິງແມ່ນວ່າການໃຊ້ຈ່າຍຄ່າແຮງງານຜ່ານມາແຕ່ລະປີກໍຕາມບໍ່ໃຫ້ຈົດເອົາ, ຖ້າບໍ່ໄດ້ຈ້າງຂຽນ0.*ກໍລະນີແຍກບໍ່ໄດ້ ແມ່ນໃຫ້ປະເປົ່າຫວ່າງບໍ່ຕ້ອງຂຽນຫັຍງໃສ່*

ຄຳຖາມ5: ຖ້າທ່ານຫາກບໍ່ສາມາດແຍກຄ່າວັດສະດຸກໍ່ສ້າງ ແລະ ຄ່າແຮງງານໄດ້ ແມ່ນໃສ່ມູນຄ່າລວມກັນເລີຍ. ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດ. *ກໍລະນີຄຳຖາມ 3 ແລະ 4 ບໍ່ມີຂໍ້ມູນ(ບໍ່ສາມາດແຍກໄດ້) ຈຶ່ງຖາມຄຳຖາມນີ້ເພື່ອລວມເອົາມູນຄ່າການໃຊ້ຈ່າຍທັງໝົດໃສ່, ແຕ່ຖ້າຄຳຖາມ 3 ແລະ 4 ມີຂໍ້ມູນແລ້ວຄຳຖາມ 5 ບໍ່ຈຳເປັນຖາມຕໍ່ ແລະກໍ່ບໍ່ໃຫ້ລວມມູນຄ່າໃນຄຳຖາມ 3 ແລະ 4 ໃສ່ນີ້.*

ຂ. ສຳຫລັບພາກນີ້ແມ່ນຈະຖາມເຖິງກິດຈະກຳການກໍ່ສ້າງສຳລັບການກະສິກຳ ຫລື ທຸລະກິດໃໝ່ ຫລື ຂະຫຍາຍອາຄານດັ່ງກ່າວ ໃນໄລຍະ 12ເດືອນຜ່ານມາ, ນັບທັງການກໍ່ສ້າງໃໝ່ ແລະຂະຫຍາຍ, ຢາກຮູ້ເຖິງແຮງງານ, ຄ່າຈ້າງ ແລະມູນຄ່າການກໍ່ສ້າງ.(ຖ້າມີຂີດວົງອ້ອມເອົາເລກ 1, ຖ້າບໍ່ມີຂີດວົງອ້ອມເອົາເລກ 2 ແລ້ວຂ້າມໄປພາກ III. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດ), **ການທີ່ຈະຖືວ່າແມ່ນການກໍ່ສ້າງອາຄານກະສິກຳ ຫລືທຸລະກິດນັ້ນ ແມ່ນຕ້ອງມີມູນຄ່າ 1 000 000 ກີບ ຂື້ນໄປ, ຖ້າຫລຸດນັ້ນຖືວ່າບໍ່ມີການກໍ່ສ້າງ**.

## ພາກການກໍ່ສ້າງໃໝ່ ຫລື ຂະຫຍາຍອາຄານທຸລະກິດ ,ອາຄານສຳລັບການກະສິກຳ.

ຄຳຖາມ1: ຈຳນວນແຮງງານທີ່ໄດ້ປະກອບສ່ວນເຂົ້າໃນການກໍ່ສ້າງນີ້ມີຈັກຄົນ?
*(ລວມທັງສະມາຊິກຄົວເຮືອນຂອງທ່ານ).*

ໃຫ້ເອົາແຕ່ການກໍ່ສ້າງໄລຍະ 12 ເດືອນ, ມີຈັກແຮງງານຕົ້ນຕໍທີ່ໄດ້ເຮັດວຽກດັ່ງກ່າວ, ຖ້າມີບາງຄົນມາຊ່ວຍບາງຄັ້ງຄາວແມ່ນບໍ່ໃຫ້ນັບເອົາ

ຄຳຖາມ2: ຄຳຖາມ 2 ນີ້ເພື່ອຊອກຮູ້ອັດຕາຄ່າຈ້າງແຮງງານຈັກກີບຕໍ່ຫົວຄົນ? ສຳຫລັບຄົວເຮືອນທີ່ໄດ້ຈ້າງຄ່າແຮງງານ, ກໍລະນີບໍ່ໄດ້ຈ້າງແມ່ນຂຽນ 0

ຄຳຖາມ3: ໃນ 12 ເດືອນຜ່ານມາມູນຄ່າວັດສະດຸກໍ່ສ້າງທີ່ໄດ້ໃຊ້ທັງໝົດຫລາຍປານໃດ?(ຊຶ່ງບໍ່ລວມເອົາຄ່າແຮງງານ)

ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດເທົ່ານັ້ນ.ເຖິງແມ່ນວ່າມູນຄ່າການກໍ່ສ້າງຈະຈ່າຍໄປໃນແຕ່ລະປີຜ່ານມາແລ້ວກໍຕາມບໍ່ໃຫ້ຈົດເອົາ.*ກໍລະນີແຍກບໍ່ໄດ້ແມ່ນໃຫ້ປະເປົ່າຫວ່າງບໍ່ຕ້ອງຂຽນຫັຍງໃສ່*

ຄຳຖາມ4: ໃນ 12 ເດືອນຜ່ານມາທ່ານໄດ້ໃຊ້ຈ່າຍຄ່າແຮງງານທັງໝົດຫລາຍປານໃດ? ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດເທົ່ານັ້ນ. ເຖິງແມ່ນວ່າການໃຊ້ຈ່າຍຄ່າແຮງງານຜ່ານມາແຕ່ລະປີກໍຕາມບໍ່ໃຫ້ຈົດເອົາ.*ກໍລະນີແຍກບໍ່ໄດ້ແມ່ນໃຫ້ປະເປົ່າຫວ່າງບໍ່ຕ້ອງຂຽນຫັຍງໃສ່*

ຄຳຖາມ5: ຖ້າທ່ານຫາກບໍ່ສາມາດແຍກຄ່າວັດສະດຸກໍ່ສ້າງ ແລະ ຄ່າແຮງງານໄດ້ ແມ່ນໃສ່ມູນຄ່າລວມກັນເລີຍ. ຖ້າຄຳຕອບເປັນເງິນຕຣາໃຫ້ປ່ຽນເປັນເງິນກີບຕາມອັດຕາທະນາຄານເປັນຫລັກ. ໃຫ້ນັບເອົາໃນເຂດ 12 ເດືອນຄືນຫລັງໃນເວລາທ່ານໄປສຳພາດ. *ກໍລະນີຄຳຖາມ 3 ແລະ 4 ບໍ່ມີຂໍ້ມູນ(ບໍ່ສາມາດແຍກໄດ້) ຈຶ່ງຖາມຄຳຖາມນີ້ເພື່ອລວມເອົາມູນຄ່າການໃຊ້ຈ່າຍທັງໝົດໃສ່, ແຕ່ຖ້າຄຳຖາມ 3 ແລະ 4 ມີຂໍ້ມູນແລ້ວຄຳຖາມ 5 ບໍ່ຈຳເປັນຖາມຕໍ່ ແລະກໍ່ບໍ່ໃຫ້ລວມມູນຄ່າໃນຄຳຖາມ 3 ແລະ 4 ໃສ່ນີ້.*

## *ພາກທີ III ການຜະລິດ, ທຸລະກິດ ແລະການຄ້າຄົວເຮືອນ (ບໍ່ລວມເອົາການຜະລິດການກະສິກຳ )*

**ຫົວໜ່ວຍທຸລະກິດນີ້ແມ່ນການດຳເນີນທຸລະກິດຕ່າງໆ(ໝາຍເຖິງການຊື້-ການຄ້າຂາຍ, ການບໍລິການ, ການຜະລິດຕ່າງໆທີ່ບໍ່ກ່ຽວຂ້ອງກັບການກຳສິກຳ)**

ຄຳຖາມ 1. 1. ໃນໄລຍະ 12 ເດືອນ ຜ່ານມາ ຄົວເຮືອນຂອງທ່ານ

ໄດ້ດຳເນີນກິດຈະກຳໃດໜຶ່ງເພື່ອເພື່ອສ້າງລາຍຮັບບໍ່? (ບໍ່ລວມການກະສິກຳ) ໝາຍເຖິງທຸລະກິດ (ກິດຈະກຳ) ທີ່ບໍ່ແມ່ນການກະສິກຳ: ເຊັ່ນກໍ່ສ້າງ-ສ້ອມແປງຕ່າງໆການຄ້າຂາຍເຫລົ່ານີ້ເປັນຕົ້ນ ການຂຽນຄຳຕອບແມ່ນໃຫ້ຂີດວົງອ້ອມເອົາເລກ 1 ຖ້າໄດ້ເຮັດ, ເລກ 2 ຖ້າບໍ່ໄດ້ເຮັດ ແລ້ວຂ້າມໄປພາກ IV.

ຄຳຖາມ 2. ບັນດາກິດຈະກຳໃນໄລຍະ 12 ເດືອນຜ່ານມາ

ນີ້ໝາຍເຖິງກິດຈະກຳທຸລະກິດທີ່ກຳລັງເຮັດຢູ່ເຊິ່ງບໍ່ແມ່ນທຸລະກິດ ກະສິກຳ, ໃຫ້ຂຽນຊື່ຂອງທຸລະກິດທີ່ເຮັດຢູ່ນັ້ນ ຕົວຢ່າງ : (ຖ້າຫາກມີຫລາຍຫົວໜ່ວຍທຸລະກິດ)

| ເລກລຳດັບ | ຊື່ກິດຈະກຳ | |
|---|---|---|
| 1. | ຂາຍເຄື່ອງແຫ້ງ | ຜະລິດເສັ້ນເຂົ້າປຸ້ນ |
| 2. | ສານຕິບເຂົ້າຂາຍ | |
| 3. | ຕຳ່ຫູກທໍໄໝ | |

ນອກຈາກນີ້ຍັງມີນັ່ງຂາຍຜັກ-ຂາຍປູປາ-(ການຂາຍຜັກ-ຂາຍປູປາແມ່ນສະເພາະຊາວຄ້າຂາຍທີ່ບໍ່ໄດ້ເອົາຜະລິດຕະພັນຂອງຕົນເອງມາຂາຍ,ການລັດຊື້ຂາຍຕໍ່ມີກັນ) ຂາຍເຄື່ອງຂອງຢູ່ຕະຫລາດ,ຍູ້ລໍ້ຮັບຊື້ ຫລື ຂາຍເສດແກ້ວເສດເຫລັກຕ່າງໆ... *(ເພື່ອຂຽນກິດຈະກຳໃຫ້ສອດຄ່ອງໃຫ້ເບິ່ງລາຍການກິດຈະກຳທີ່ຕິດຄັດກັບແບບສອບຖາມ ແລະຕ້ອງຂຽນໃຫ້ຈະແຈ້ງ)*

ຄຳຖາມ 3. ປັດຈຸບັນນີ້ສະມາຊິກໃນຄົວເຮືອນຂອງທ່ານທີ່ດຳເນີນທຸລະກິດເປັນປົກກະຕິມີຈັກຄົນ? ໃຫ້ຂຽນລົງໃສ່ຊ່ອງພຽງແຕ່ຕົວເລກ.

ຄຳຖາມ4: ປັດຈຸບັນນີ້ມີຈຳນວນກຳມະກອນທັງໝົດຫລາຍປານໃດ? ທີ່ເຮັດວຽກເຫລົ່ານີ້,ບໍ່ນັບສະມາຊິກໃນຄົວເຮືອນ.(ຈ້າງແຮງງານນອກ)

ຂຽນຈຳນວນແຮງງານໃສ່, ຖ້າບໍ່ມີຂຽນ0

ຄຳຖາມ5: ໂດຍສະເລ່ຍໃນ 1 ເດືອນທ່ານໄດ້ຈ່າຍຄ່າແຮງງານໃຫ້ບຸກຄົນເຫລົ່ານີ້ຫລາຍປານໃດ?

ນັບທັງສະມາຊິກໃນຄົວເຮືອນທີ່ມີອັດຕາເງິນເດືອນ(ຖ້າເປັນວັດຖຸ ຫລື ຂອງຂວັນຕ່າງໆໃຫ້ຕີລາຄາເປັນເງິນສົດ,ຖ້າເປັນເງິນຕຣາກໍໃຫ້ປ່ຽນເປັນເງິນກີບ).

ຄຳຖາມ6: ໃນ 1 ເດືອນຜ່ານມາລວມຍອດລາຍຮັບຈາກທຸລະກິດຂອງທ່ານແຕ່ລະຫົວໜ່ວຍມີລາຍຮັບຫລາຍປານໃດ?

ໃຫ້ແຍກອອກຈາກກັນຖ້າມີຫລາຍຫົວໜ່ວຍທຸລະກິດ. ຕົວຢ່າງ:ຄອບຄົວທ່ານບຸນລວຍມີ 2 ຫົວໜ່ວຍທຸລະກິດ.ເມຍຂອງລາວຂາຍເຄື່ອງອຸປະໂພກ-ບໍລິໂພກຢູ່ຕະ

ຫລາດ1ເດືອນຜ່ານມາຂາຍໄດ້ 10.000.000 ກີບ, ສ່ວນທ້າວບຸນລອຍ ແລ່ນລົດໂດຍສານໄດ້ 5.000.000 ກີບ.

ຄຳຖາມ7: ໃນ 12 ເດືອນຜ່ານມາລາຍຮັບຈາກກິດຈະກຳໂດຍສະເລ່ຍແລ້ວເທົ່າໃດຕໍ່ເດືອນ? ໂດຍເອົາລາຍຮັບໝົດປີຂອງຫົວໜ່ວຍທຸລະກິດໃຜລາວ ມາຫານໃຫ້12ເດືອນ, ສຳຫລັບກິດຈະກຳທີ່ດຳເນີນເປັນລະດູການແມ່ນມາຫານຕາມຈຳນວນເດືອນທີ່ໄດ້ມີລາຍຮັບຕົວຈິງ

## *ພາກທີ IV. ການກະສິກຳ.*

**ຄຳຖາມນີ້** ຢາກຮູ້ວ່າຄົວເຮືອນດັ່ງກ່າວໄດ້ມີການປູກພືດຊະນິດໃດໜຶ່ງບໍ່ ແລະເນື້ອປູກໃດໜຶ່ງຕ້ອງມີເນື້ອທີ່ແຕ່ 0.02ເຮັກຕາຂຶ້ນໄປ ຫລື ເທົ່າກັບ 200 ຕາແມັດມົນທົນຈຶ່ງຖືວ່າໄດ້ດຳເນີນການກະສິກຳ, ຖ້າຫລຸກນັ້ນຖືວ່າບໍ່ໄດ້ດຳເນີນ, ໃຫ້ຂີດວົງອ້ອມເອົາ 1 ຖ້າໄດ້ ແລະ ຂີດວົງອ້ອມເອົາ 2 ຖ້າບໍ່ແລ້ວຂ້າມໄປຫາ IV.3.

## *ພາກທີ IV.1. ການປູກພືດ ແລະການເກັບກ່ຽວຜົນຜະລິດໃນ 12 ເດືອນຜ່ານມາ.*

**ໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ທຳການປູກພືດຫຍັງແດ່?**

ຄຳຖາມ1: ໃຫ້ບັນທຶກລະຫັດຂອງພືດໝົດທຸກຊະນິດພືດທີ່ຄົວເຮືອນຂອງທ່ານໄດ້ທຳການປູກຝັງລົງໃສ່ແຕ່ລະແຖວ,ເຖິງວ່າຈະມີພືດຫລາຍຊະນິດປູກປະປົນກັນກໍຕາມ.(ໃຫ້ຖາມຄຳຖາມ 2 ກ່ອນເພື່ອຈະໄດ້ລາຍຊື່ຂອງພືດຈາກນັ້ນຈຶ່ງໃສ່ລະຫັດຂອງພືດ)

ຄຳຖາມ2: ຂຽນລາຍຊື່ຂອງພືດທີ່ໄດ້ປູກແຕ່ລະຢ່າງລົງເປັນແຖວ

ຕົວຢ່າງ :

| ເລກລະຫັດຂອງພືດ | ຊື່ຂອງພືດທີ່ໄດ້ປູກ |
|---|---|
| 701 | ເຂົ້າເປືອກໜຽວ |
| 702 | ເຂົ້າເປືອກຈ້າວ |
| 38 | ໝາກຫຸ່ງ |
| 69... | ຜັກສະຫລັດ... |

ຄຳຖາມ3: ພືດທີ່ໄດ້ປູກຢູ່ໃນຄົວເຮືອນຂອງທ່ານແມ່ນເພື່ອຈຸດປະສົງຫຍັງ?ມີ 3 ຄຳຕອບໃຫ້ເລືອກໃນປຶ້ມແບບສອບຖາມ,ໃຫ້ເລືອກເອົາ 1 ຄຳຕອບທີ່ເໝາະສົມແລ້ວຂຽນຕົວເລກນັ້ນລົງໃສ່ຕາມແຕ່ລະແຖວ.

ຄຳຖາມ4: ໝາກຜົນຂອງຜົນຜະລິດກໍຄືການເກັບກ່ຽວທີ່ໄດ້ຮັບໄລຍະ 12 ເດືອນຜ່ານມາ ຕົວຢ່າງ: ປະລິມານການຄາດຄະເນ ຫລື ຕົວຈິງ, ຫ້ອງຫົວໜ່ວຍພະຍາຍາມໃຫ້ຄິດໄລ່ເປັນກິໂລກຣາມ.

## *ພາກທີ IV.2. ການຂາຍ/ແລກປ່ຽນຜົນຜະລິດໃນ 12 ເດືອນຜ່ານມາ.*

ຄຳຖາມ1: ໃນໄລຍະ 12 ເດືອນ ຜ່ານມາ ຄົວເຮືອນຂອງທ່ານໄດ້ຂາຍ/ແລກປ່ຽນ ຜົນຜະລິດກະສິກຳຂອງຕົນເອງບໍ່?

ໝາຍຄຳຕອບ1 ຖ້າໄດ້ຂາຍ, 2 ຖ້າບໍ່ໄດ້ຂາຍ ຂ້າມໄປ IV.3.

ຖ້າໄດ້ຂາຍຜົນຜະລິດໃດໜຶ່ງໃຫ້ບັນທຶກຊື່ຂອງພືດລົງໃສ່ແຕ່ລະແຖວ, ບັນທຶກຈຳນວນ ເປັນກິໂລ ແລະມູນຄ່າ ພ້ອມທັງບອກສະຖານທີ່ໄດ້ຂາຍ, ກໍລະນີພືດໜຶ່ງໄດ້ຂາຍຫລາຍເທື່ອ ແລະສະຖານທີ່ຕ່າງກັນແມ່ນໃຫ້ຈົດແຍກ ແຕ່ຄັ້ງລົງມາຕາມແຕ່ແຖວ. *ກໍລະນີບາງພືດທີ່ຂາຍບໍ່ສາມາດເກັບກຳເປັນຫົວໜ່ວຍຈຳນວນໄດ້ກໍໃຫ້ເອົາລາຄາລວມຈາກການຂາຍຂອງພືດຊະນິດນັ້ນ.*

## *ພາກທີ IV.3. ການປະມົງ*

ຄຳຖາມ 1. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ໄດ້ລ້ຽງປາ ຫລື ຫາປາຈາກທຳມະຊາດບໍ ? : ຂີດວົງອ້ອມເອົາຄຳຕອບທີ່ຖືກຕ້ອງ

1 =ໄດ້ລ້ຽງ/ໄດ້ຫາ; 2 = ບໍ່ໄດ້ລ້ຽງ/ບໍ່ໄດ້ຫາ ແລ້ວຂ້າມໄປຖາມພາກ IV.4.

ຄຳຖາມ 2. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ມີລາຍໄດ້ຈາກການຂາຍ ຫລື ການແລກປ່ຽນຈາກຜລິດຕະພັນປາບໍ?( 1.ຈາກປາທຳມະຊາດຈັກກີບ;2.ຈາກປາລ້ຽງເອງຈັກກີບ?,ຖ້າບໍ່ມີໃຫ້ຂຽນ 0).

ຄຳຖາມ3: ການນຳປາຈາກທຳມະຊາດ ແລະ ປາລ້ຽງ ມາເປັນອາຫານໃນຄົວເຮືອນຂອງທ່ານຕາມປົກກະຕິປາຈາກທຳມະຊາດ ແລະ ປາລ້ຽງເອງອາທິດລະຈັກກິໂລ? ໃຫ້ຂຽນລົງພຽງແຕ່ຕົວເລກ.

## *ພາກ IV.4.ການປ່າໄມ້*

ຄຳຖາມ 1. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ນຳເອົາໄມ້ຈາກປ່າແຫ່ງອື່ນໆ ຫລື ຈາກປ່າຂອງຕົນເອງມານຳໄຊ້ເຂົ້າໃນວຽກງານໃດໜຶ່ງບໍ?ຕົວຢ່າງ:ການຈັກສານ,ການລ້ອມຮົ້ວ,ເຮັດວົງກົບ-ບານປະຕູ...

1 = ໄດ້ເອົາ, 2 = ບໍ່ໄດ້ເອົາ ແລ້ວໄປ ຖາມຂໍ້ IV.5.

ຄຳຖາມ2 . ໂດຍສະເລ່ຍ ຄົວເຮືອນຂອງທ່ານໄດ້ເກັບພືດພັນປ່າໄມ້ຫລືສວນໄມ້ຂອງຕົນເອງ ເພື່ອຊົມໃຊ້ , ມີມູນຄ່າສະເລ່ຍຫລາຍປານໃດຕໍ່ເດືອນ?

ເຊັ່ນ : ໄມ້ທ່ອນ,ໄມ້ຟືນ/ຖ່ານດັງໄຟ,ໄມ້ໃຜ່,ໄມ້ປຸກສ້າງ,ໄມ້ແບບ,ໄມ້ຫລັກຮົ້ວ,ປະເພດໜໍ່ໄມ້ ,ໜໍ່ຫວາຍ,ໜໍ່ແຍ້ຕ່າງໆ ແລະ ຜັກທຳມະຊາດອື່ນໆ ທີ່ນຳມາຈາກປ່າ.ໃຫ້ຂຽນແຕ່ຈຳນວນຕົວເລກໃສ່ເປັນເງິນກີບ.

**ລະຫັດ ແລະ ລາຍການປ່າໄມ້ຕ່າງໆ㊀ເພື່ອການຊົມໃຊ້:**

| ລະຫັດ | ລາຍການ | ຄຳອະທິບາຍ | ຕົວຢ່າງ ແລະ ຈຸດປະສົງການນຳໃຊ້ |
|---|---|---|---|
| 135 | ປະເພດ ໜໍ່ | ໜໍ່ໄມ້ທຸກຊະນິດ | ໜໍ່ແຍ້,ໜໍ່ຫວາຍ,ໜໍ່ບຸ່ນ,ໜໍ່ພ້າວ,ໜໍ່ຕາວ... |
| 1351 | ຜັກອື່ນໆຈາກປ່າ | ຜັກປ່າທຸກຊະນິດ | ຜັກຕິ້ວ,ສະເມັກ,ເຫັດ,ໝາກແຄນ,ໝາກໝາດ... |
| 1352 | ອື່ນໆຈາກປ່າໄມ້ | ເຄື່ອງປ່າຂອງດົງ | ຄັ່ງ,ຂີ້ຊີ,ຫວາຍ,ຢາພື້ນເມືອງ.. |
| 199 | ໄມ້ຟືນ/ຖ່ານດັງໄຟ | | |
| 1991 | ໄມ້ທ່ອນ | ສາມາດນຳມາແປຮູບ | ໄມ້ວົງກົບ,ບານປະຕູ ຫລື ເຟີເນີເຈີຕ່າງໆ... |
| 1992 | ໄມ້ປ່ອງ | ໄມ້ໄຜ່ທຸກຊະນິດ | ການຈັກສານ ແລະ ເຮັດຮາວຮົ້ວຕ່າງໆ...(ຂຶ້ນກັບຈຸດປະສົງນຳໃຊ້) |
| 1993 | ໄມ້ປຸກສ້າງ | ໄມ້ກົມນ້ອຍ | ໄມ້ເສົາເຮືອນ,ໄມ້ຄ້ຳແບບຕ່າງໆ... |
| 1994 | ໄມ້ຫລັກຮົ້ວ | ໄມ້ໄຜ່ ຫລື ໄມ້ກົມນ້ອຍ | ຫລັກຮົ້ວອ້ອມບ້ານ ຫລື ອອ້ມສວນ... |

ຄຳຖາມ3 . ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ຂາຍ ຫລື ແລກປ່ຽນຜະລິດຕະພັນຈາກປ່າແຫ່ງອື່ນໆ ຫລື ຈາກປ່າໄມ້ຂອງຕົນເອງຫລາຍປານໃດ?. ເຊັ່ນ : ໄມ້ທ່ອນ,ໄມ້ຟືນ/ຖ່ານດັງໄຟ,ໄມ້ໃຜ່,ໄມ້ປຸກສ້າງ,ໄມ້ແບບ,ໄມ້ຫລັກຮົ້ວ,ປະເພດໜໍ່ ແລະ ຜັກທຳມະຊາດອື່ນໆທີ່ນຳມາຈາກປ່າ.ໃຫ້ຂຽນແຕ່ຈຳນວນຕົວເລກເປັນເງິນກີບໃສ່ .

**ລະຫັດ ແລະ ລາຍການປ່າໄມ້ຕ່າງໆ㊀ເພື່ອການຂາຍ ແລະ ແລກປ່ຽນ:**

| ລະຫັດ | ລາຍການ | ຄຳອະທິບາຍ | ຕົວຢ່າງ ແລະ ຈຸດປະສົງການນຳໃຊ້ |
|---|---|---|---|
| 408 | ປະເພດ ໜໍ່ | ໜໍ່ໄມ້ທຸກຊະນິດ | ໜໍ່ແຍ້,ໜໍ່ຫວາຍ,ໜໍ່ບຸ່ນ,ໜໍ່ພ້າວ,ໜໍ່ຕາວ... |
| 4081 | ຜັກອື່ນໆຈາກປ່າ | ຜັກປ່າທຸກຊະນິດ | ຜັກຕິ້ວ,ສະເມັກ,ເຫັດ,ໝາກແຄນ,ໝາກໝາດ... |
| 4082 | ອື່ນໆຈາກປ່າໄມ້ | ເຄື່ອງປ່າຂອງດົງ | ຄັ່ງ,ຂີ້ຊີ,ຫວາຍ,ຢາພື້ນເມືອງ... |
| 418 | ໄມ້ຟືນ/ຖ່ານດັງໄຟ | | |
| 4181 | ໄມ້ທ່ອນ | ສາມາດນຳມາແປຮູບ | ໄມ້ວົງກົບ,ບານປະຕູ ຫລື ເຟີເນີເຈີຕ່າງໆ... |
| 4182 | ໄມ້ປ່ອງ | ໄມ້ໄຜ່ທຸກຊະນິດ | ການຈັກສານ ແລະ ເຮັດຮາວຮົ້ວຕ່າງໆ...(ຂຶ້ນກັບຈຸດປະສົງນຳໃຊ້) |
| 4183 | ໄມ້ປຸກສ້າງ | ໄມ້ກົມນ້ອຍ | ໄມ້ເສົາເຮືອນ,ໄມ້ຄ້ຳແບບຕ່າງໆ... |
| 4184 | ໄມ້ຫລັກຮົ້ວ | ໄມ້ໄຜ່ ຫລື ໄມ້ກົມນ້ອຍ | ຫລັກຮົ້ວອ້ອມບ້ານ ຫລື ອອ້ມສວນ... |

## *ພາກທີ IV.5. ການລ້ຽງສັດ*

ໃນ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ລ້ຽງ ຫລື ຄອບຄອງສັດຊະນິດໃດນຶ່ງບໍ?

ໃຫ້ຂີດວົງອ້ອມເອົາ 1=ໄດ້ລ້ຽງ 2=ບໍ່ໄດ້ລ້ຽງ ຖາມພາກ IV.6.

ຄຳຖາມ 1. ປັດຈຸບັນຄົວເຮືອນຂອງທ່ານລ້ຽງສັດປະເພດນີ້ ຈັກໂຕ ? ນັບທັງໂຕໃຫຍ່ ແລະນ້ອຍເຊັ່ນ : ງົວ, ຄວາຍ, ໝູລາດ, ໝູພັນ, ແບ້, ແກະ, ຊ້າງ, ມ້າ, ສັດອື່ນ ໆ.(ແຕ່ລະແຖວຖ້າບໍ່ໄດ້ລ້ຽງໃຫ້ຂຽນ 0)

ຄຳຖາມ 2. ສັດລ້ຽງເຫລົ່ານີ້ມີມູນຄ່າຫຼາຍປານໃດ ?ລວມແຕ່ລະປະເພດ(ລາຄາໃນປັດຈຸບັນ)

ຕົວຢ່າງ :

| ລ/ດ | ຊື່ສັດລ້ຽງ | ຄຳຖາມ 1 | ຄຳຖາມ 2 |
|---|---|---|---|
| 1. | ງົວ | 6 | 5.500.000 |

ຄຳຖາມ3. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ ຂາຍສັດລ້ຽງແຕ່ລະຊະນິດຈັກໂຕ ? .(ແຕ່ລະແຖວຖ້າບໍ່ໄດ້ຂາຍໃຫ້ຂຽນ 0)

ຕົວຢ່າງ:

| ລ/ດ | ຊື່ສັດລ້ຽງ | ຄຳຖາມ3 | ຄຳຖາມ 4 |
|---|---|---|---|
| 1 | ງົວ | 10 | 2 |

ຄຳຖາມ4. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ຂາຍສັດລ້ຽງແຕ່ລະຊະນິດ ທັງໝົດມູນຄ່າເທົ່າໃດ ?

ຕົວຢ່າງ:

| ລ/ດ | ຊື່ສັດລ້ຽງ | ຄຳຖາມ 4 | ຄຳຖາມ 5 |
|---|---|---|---|
| 1 | ງົວ | 2 | 2.500.000 |

ຄຳຖາມ5. ໃນໄລຍະ 12 ເດືອນຜ່ານມາ ສັດລ້ຽງແຕ່ລະຊະນິດໃນຄົວເຮືອນຂອງທ່ານຖືກເສຍ-ຕາຍພາກ ຫລື ເອົາໃຫ້ຄົນອື່ນຈັກໂຕ?(ຖ້າບໍ່ມີໃຫ້ຂຽນ 0 ໃສ່)

ຕົວຢ່າງ:

| ລ/ດ | ຊື່ສັດລ້ຽງ | ຄຳຖາມ 6 |
|---|---|---|
| 1 | ງົວ | 1 |

ຄຳຖາມ6. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ນຳເອົາສັດລ້ຽງຂອງຕົນເອງມາຊົມໃຊ້ກິນເປັນອາຫານຈັກໂຕ?(ຖ້າບໍ່ມີໃຫ້ຂຽນ 0 ໃສ່).

ຕົວຢ່າງ:

| ລ/ດ | ຊື່ສັດລ້ຽງ | ຄຳຖາມ 7 |
|---|---|---|
| 1 | ງົວ | 1 |

ຄຳຖາມ7. ໃນ 12ເດືອນຜ່ານມາຄົວເຮືອນຂອງທ່ານກິນສັດລ້ຽງຕົນເອງມີມູນຄ່າເທົ່າໃດ? ໃຫ້ຂຽນມູນຄ່າສັດທີ່ຄົວເຮືອນຂອງຕົນເອງຂ້າກິນ, ຖ້າຄຳຖາມ 7 ບໍ່ໄດ້ກິນຄຳຖາມນີ້ກໍ່ຂຽນ 0ໃສ່

ຄຳຖາມ8: ກ່ອນໜ້ານີ້ 12 ເດືອນນຄົວເຮືອນຂອງທ່ານລ້ຽງສັດປະເພດນີ້ ຈັກໂຕ ?. (ແຕ່ລະແຖວຖ້າບໍ່ໄດ້ລ້ຽງໃຫ້ຂຽນ 0)

| ລ/ດ | ຊື່ສັດລ້ຽງ | ຄຳຖາມ1 | ຄຳຖາມ 2 | ຄຳຖາມ3 |
|---|---|---|---|---|
| 1. | ງົວ | 6 | 5.500.000 | 10 |

## *ພາກທີ IV.6 ສັດປີກ*

ໃນໄລຍະ 4ອາທິດຜ່ານມາຄົວເຮືອນຂອງທ່ານໄດ້ລ້ຽງສັດປີກຊະນິດໃດຊະນິດນຶ່ງບໍ?

ຄຳຕອບວ່າ ໄດ້ລ້ຽງ ໃຫ້ຂີດວົງອ້ອມເອົາເລກ 1= ໄດ້ລ້ຽງ , ຖ້າຄຳຕອບວ່າ ບໍ່ໄດ້ ລ້ຽງໃຫ້ຂີດວົງມົນເອົາເລກ 2 = ບໍ່ໄດ້ລ້ຽງ ແລ້ວຂ້າມໄປຖາມ ພາກ IV.7.

ຄຳຖາມ1: ປັດຈຸບັນຄົວເຮືອນຂອງທ່ານໄດ້ລ້ຽງສັດແຕ່ລະປະເພດຈັກໂຕ? ໃຫ້ຂຽນຈຳນວນສັດທີ່ມີໃນມື້ໄປສຳພາດນັ້ນໃສ່, ຖ້າບໍ່ມີຂຽນ0

ຄຳຖາມ 2. ໃນໄລຍະ 4ອາທິດຜ່ານມາຄົວເຮືອນຂອງທ່ານໄດ້ຂາຍສັດປີກຊະນິດໃດແດ່ ແລະ ຈຳນວນເທົ່າໃດໂຕ?

ຂຽນຈຳນວນສັດທີ່ໄດ້ຂາຍ, ຖ້າບໍ່ໄດ້ຂາຍໃຫ້ຂຽນ0

ຄຳຖາມ3. ສັດປີກທີ່ໄດ້ຂາຍແຕ່ລະຊະນິດມີມູນຄ່າລວມຫຼາຍປານໃດ ?

ຖ້າຄຳຖາມ 2 ໄດ້ຂາຍ, ຄຳຖາມນີ້ຕ້ອງໄດ້ມີມູນຄ່າການຂາຍ ແລະ ນັກເດີນ ສຳຫລວດຕ້ອງເບິ່ງຄວາມເໝາະສົມໂດຍການສົມທຽບຈຳນວນ ແລະມູນຄ່າທີ່ຄົວເຮືອນຕອບ

ຄຳຖາມ 4. ໃນໄລຍະ 4ອາທິດຜ່ານມາຄົວເຮືອນຂອງທ່ານ ໄດ້ເອົາສັດປີກຂອງຕົນມາບໍລິໂພກ ແລກປ່ຽນ ຫລື ເອົາໃຫ້ຄົນອື່ນເທົ່າໃດໂຕ?

## *ພາກທີ IV.7. ລາຍການອື່ນໆ*

ໃນໄລຍະ 4 ອາທິດທີ່ຜ່ານມາ ຄົວເຮືອນຂອງທ່ານໄດ້ຂາຍຜະລິດຕະພັນກະສິກຳອັນອື່ນອີກບໍເຊັ່ນ:(ໄຂ່ເປັດ,ໄຂ່ໄກ່,ໄຂ່ນົກ,ດອກໄມ້,ນ້ຳເຜີ້ງ,ກົບ,ຂຽດ,ໄຂ່ມົດແດງ...,ຫລື ຜະລິດຕະພັນຈາກການລ່າເນື້ອ ແລະ ຜະລິດຕະພັນຈາກປ່າໄມ້ (ເຄື່ອງປ່າຂອງນາ)ເປັນເງິນເທົ່າໃດກີບໃນແຕ່ລະຜະລິດຕະພັນ?.

**<u>ຕົວຢ່າງ:ລະຫັດຜະລິດຕະພັນກະສິກຳ ຫລື ຈາກການລ່າເນື້ອ.</u>**

| ລະຫັດ | ລາຍການ | ໝາຍເຫດ |
|---|---|---|
| 4130 | ນົມ | ນົມງົວ |
| 4140 | ໄຂ່ | ເປັດລາດ/ເປັດກີກ |
| 4141 | ໄຂ່ | ໄກ່ລາດ/ໄກ່ພັນ |
| 4060 | ຮຳ | ຮຳເກືອສັດ |
| 4061 | ເຂົ້າປາຍ-ເຂົ້າປຽນ | ເຂົ້າມຸ່ນສຳລັບເກືອສັດ |
| 4070 | ຢາເສັ້ນ | ໃບຢາສູບ |
| 4071 | ນ້ຳອ້ອຍ/ນ້ຳຕານ | ເປັນນ້ຳ ຫລື ເປັນກ້ອນ |
| 4072 | ຝ້າຍ | ເຮັດໝອນ/ ເສື່ອ |
| 4073 | ຊາ | ຊາດື່ມ |
| 4150 | ກົບ/ຂຽດ/ອື່ງ... | ສັດເຄິ່ງບົກເຄິ່ງນ້ຳ |
| 4151 | ໄຂ່ມົດແດງ/ແມ່ງໄມ້ຕ່າງໆ | ສາມາດເປັນອາຫານໄດ້ |
| 4152 | ນົກ/ເຈຍ...ປະເພດສັດປີກ | ສະເພາະສັດປ່າ |
| 4153 | ງູ | ງູທຸກຊະນິດ |
| 4154 | ກວາງ | |
| 4155 | ຟານ | |
| 4156 | ໝູປ່າ | |
| 4157 | ໜັງສັດ-ເຂົາ-ດູກ | ນັບທັງສັດປ່າ |
| 4158 | ຮອກ-ກະແຕ-ເຫງັນ-ບ່າງ | ແລະ ຈຳພວກສັດທີ່ຄ້າຍຄື |
| 4159 | ອື່ນໆ | ບອກແຈ້ງ |

## *ພາກທີ V. ການຊື້ ເຄື່ອງໃຊ້ຍາວນານຂອງຄົວເຮືອນ ໃນໄລຍະ 12 ເດືອນ ຜ່ານມາ.*

**<u>ລະຫັດການຊື້ ເຄື່ອງໃຊ້ຍາວນານໃນ12ເດືອນຜ່ານມາ:</u>**

**ເຟີນີເຈີ ແລະ ເຄື່ອງຕົບແຕ່ງເຮືອນ.**

| ລະຫັດ | ລາຍການ | ຄຳອະທິບາຍ | ຕົວຢ່າງ |
|---|---|---|---|
| 208 | ຕຽງ | ຕຽງໄມ້,ຕຽງເຫລັກ,ຕຽງສະແນນ | ຕຽງສະແນນນັ່ງຫລິ້ນ ຫລືແມ່ຢູ່ກຳໃຊ້ |
| 209 | ຕູ້ໄຂ | ຕູ້ໃຫຍ່(ຕູ້ເຟີນີເຈີ) | ຕູ້ໃສ່ເສື້ອຜ້າ,ຕູ້ສອງຖ້ານ(ຖ້ານເທິງ |

| | | | |
|---|---|---|---|
| | | | ອາດຈະໃສ່ປື້ມວາລະສານ ຫລື ຕັ້ງເທັບ ໂທລະທັດຕ່າງໆ...ຖ້ານລຸ່ມຈະໂຊວັດຖຸ ຕ່າງໆ) |
| 210 | ຕູ້ໃສ່ຈອກ | ເປັນຕູ້ໃສ່ຈອກໂດຍສະເພາະ | ຕູ້ໃສ່ຈອກແກ້ວ,ຈອກດິນ,ຖ້ວຍ-ຈານ... |
| 211 | ຊຸດໂຕະອາຫານ | ຊຸດໂຕະໄມ້,ຊຸດໂຕະເຫລັກ/ຢາງ | ຊຸດໂຕະກິນເຂົ້າ |
| 212 | ຊຸດຊາລົງ | ໂຊຟາ(ຜະລິດດ້ວຍໄມ້,ຫວາຍ,ໜັງ...) | ຢູ່ໃນຫ້ອງຮັບຮອງແຂກ |
| 213 | ໂຕະ,ຕູ້ກັບເຂົ້າ | ໂຕະ,ຕູ້ໃສ່ຖ້ວຍຊາມໃນຫ້ອງກິນເຂົ້າ | ຫລື ຢູ່ໃນເຮືອນຄົວ |
| 2214 | ຕັ່ງ,ມ້ານັ່ງ | ຕັ່ງເກົ້າອີ້,ຕັ່ງມ້າຍາວ... | ຕັ່ງນັ່ງເຮັດວຽກຫ້ອງການ,ຕັ່ງຍາວນັກຮຽນ |
| 215 | ອື່ນໆ | | |
| 216 | ຄ່າສ້ອມແປງ | ການສ້ອມແປງເຄື່ອງເຟີນິເຈີ | ສ້ອມແປງຕູ້,ໂຕະ-ຕັ່ງຕ່າງໆ... |
| 217 | ສາດປູ | ສາດຢາງ ຫລື ສາດພື | ສາດຢາງປູເຮືອນ |
| 218 | ຜ້າປູບ່ອນ | ຜ້າເຊື່ອ,ຜ້າປູບ່ອນ,ໝອນ | ເຊື່ອຟອງນ້ຳປູນອນ |
| 219 | ຜ້າຮົ່ມ/ມຸ້ງ | ຜ້າຮົ່ມນອນທຸກຊະນິດ/ມຸ້ງກາງນອນ | ຜ້າຮົ່ມໂຕໆ... |
| 220 | ຜ້າເຊັດ | ຜ້າເຊັດໂຕ,ຜ້າເຊັດໜ້າ | ຜ້າເຊັດຈາກໂຮງງານ ຫລື ຜ້າແພອີໂປ້ |
| 221 | ຜ້າກັ້ງ | ຜ້າກັ້ງປ່ອງຢ້ຽມ | ຜ້າກັ້ງໂຊໃນຫ້ອງນອນ ຫລື ຫ້ອງຮັບແຂກ |
| 222 | ຜ້າປູ | ໃຊ້ສຳລັບເວລາກິນອອອາຫານຕ່າງໆ | ປູໂຕະ,ຜ້າເຊັດມື,ຜ້າເຊັດປາກ |
| 223 | ຜ້າອື່ນໆ | | |
| 224 | ຄ່າສ້ອມແຊມ | ນັບແຕ່ລະຫັດ 217-223 | ການສ້ອມແຊມຜ້າ |
| 225 | ຜ້າພົມ | ພົມປູພື້ນເຮືອນ | ຜ້າພົມປູຢູ່ຫ້ອງນອນ ຫລື ຫ້ອງຮັບແຂກ |
| 226 | ກະຕ່າ | ກະຕ່າທຸກຊະນິດ | ກະຕ່າຖືໄປຕະຫລາດ,ກະຕ່າໃສ່ຂີ້ເຫຍື້ອ.. |
| 227 | ໂຖດອກໄມ້ | ໂຖປູກດອກໄມ້ | ໂຖປູກດອກເສດຖີ |
| 228 | ດອກໄມ້ | ດອກໄມ້ປະດັບ/ໂຖໃສ່ແຈກັນ | ສ່ວນຫລາຍໂຊໄວ້ທີ່ຫ້ອງຮັບຮອງແຂກ |
| 229 | ຄ່າສ້ອມແປງ | ນັບແຕ່ລະຫັດ 218-222 | ສ້ອມແປງສິ່ງຂອງດັ່ງກ່າວ |
| 230 | ດອກໄຟ | ດອກໄຟທຸກຊະນິດ ແລະ ຮູບພາບຕິດ ຝາເຮືອນ | |
| 231 | ອື່ນໆ | | |
| **ປະເພດເຄື່ອງໃຊ້ໃນຄົວເຮືອນ** | | | |
| 232 | ໝໍ້ | ໝໍ້ໜຶ້ງເຂົ້າ,ໝໍ້ແຕ່ງກິນ | ໝໍ້ໂລ ຫລື ໝໍ້ດິນ |
| 233 | ໝໍ້ຫຸງເຂົ້າໄຟຟ້າ | | |
| 234 | ໝໍ້ຕົ້ມນ້ຳໄຟຟ້າ | | |
| 235 | ແອບເຂົ້າ | | |
| 236 | ຄຸຕັກນ້ຳ | | |
| 237 | ເຕົາໄຟ | ເຕົາໄຟໄຊ້ຖ່ານ,ໃຊ້ໄຟຟ້າ,ເຕົາແກັດ | ເຕົາໄຟທີ່ບໍ່ມີເຕົາອົບ |
| 238 | ຕູ້ເຢັນ/ຕູ້ນ້ຳກ້ອນ | | |
| 239 | ເຕົາລີດ/ໂຕະລີດຜ້າ | ເຕົາລີດໃຊ້ໄຟຟ້າ ຫລື ໃຊ້ຖ່ານ | |
| 240 | ແອເຢັນ | | |

| | | | |
|---|---|---|---|
| 241 | ພັດລົມ | ພັດລົມທຸກຊະນິດ | ພັດລົມດູດອາກາດ |
| 242 | ຈັກຫຍິບເຄື່ອງ | ຈັກຫຍິບໄຟຟ້າ/ຈັກຫຍິບບໍ່ໃຊ້ໄຟຟ້າ | |
| 243 | ຈັກຊັກຜ້າ | | |
| 244 | ອື່ນໆ | ບອກແຈ້ງ | |
| 245 | ຄ່າສ້ອມແປງ | ແຕ່ລະທັດທີ 225-238 | ເຄື່ອງໃຊ້ຄົວເຮືອນ |
| ພາຫະນະ | | | |
| 276 | ລົດໃຫຍ່ | ລົດເກັ໋ງ,ລົດຕູ້,ລົດກະບະ,ລົດບັນທຸກ... | |
| 277 | ລົດຈັກ | | |
| 278 | ລົດຖີບ | ລວມເອົາທັງລົດຖີບເດັກນ້ອຍ | |
| 279 | ອື່ນໆ | ໃຫ້ເວົ້າແຈ້ງ | ລົດຕົ໊ອກໆ,ເຮືອ... |
| **ເຄື່ອງຫລິ້ນ ແລະເຄື່ອງເອ້** | | | |
| 299 | ວິທະຍຸ/ເທັບ | ວີຊີດີ/ດີວີດີ | |
| 300 | ໂທລະພາບ | | |
| 301 | ຫລັກອັງແຕນ | ຈານດາວທຽມ | |
| 302 | ເຄື່ອງຫລິ້ນວີດີໂອ | | |
| 303 | ກ້ອງຖ່າຍຮູບ | ກ້ອງຖ່າຍທຳວີດີໂອ | |
| 304 | ເຄື່ອງຫລິ້ນດົນຕຣີ | ນັບທັງອຸປະກອນການຫລິ້ນທຸກຊະນິດ | ກີຕາ,ສີຊໍ,ແຄນ,ກອງຫາງ-ກອງຊຸມ... |
| 305 | ໂທລະສັບ | ຕັ້ງໂຕະ/ໂຟນີ | |
| 306 | ໂທລະສັບ | ມືຖື | |
| 307 | ຄອມພິວເຕີ | ພ້ອມອຸປະກອນເປັນຊຸດ | |
| 308 | ຄ່າສອ້ມແປງ | ແຕ່ລະທັດທີ 292-300 | |
| 348 | ໂມງ | ໂມງທຸກຊະນິດ | |
| 349 | ເຄື່ອງເອ້ | ເພັດພອຍ,ສ້ອຍແຫວນ,ປະລັກແຂນ... | ບ້ວງຫູ-ຕຸ້ມຫູ |
| **ອຸປະກອນຮັບໃຊ້ກະສິກຳ** | | | |
| 463 | ພາຫະນະ | ພາຫະນະທີ່ນຳໃຊ້ເຂົ້າໃນການຜະລິດກະສິກຳ | ລົດໄຖນາ, ຈັກພາດເຂົ້າ, |
| 464 | ເຄື່ອງມື ແລະອຸປະກອນ | ອຸປະກອນຂະໜາດນ້ອຍທີ່ຊ່ວຍໃນການທຳການຜະລິດກະສິກຳ | ກ່ຽວ, ຈົກ, ຂວ້ານ... |
| 465 | ເຄື່ອງມື ແລະອຸປະກອນ | ຊຶ່ງແມ່ນຂະໜາດນ້ອຍຮັບໃຊ້ເຂົ້າໃນການປ່າໄມ້ | ເລື່ອຍມື,ຈັກສະຕິນ... |
| 466 | ເຄື່ອງມື ແລະອຸປະກອນ | ອຸປະກອນສຳຫລັບການປະມົງຂະໜາດນ້ອຍ | ແຫ,ມອງ,ເບັດ,ລູກແຫ-ລູກມອງສາຍຢາງ-ສາຍເອັນ,ລອບ-ໄຊ-ຈັ່ນ... |
| **ອຸປະກອນຮັບໃຊ້ທຸລະກິດ** | | | |
| 555 | ພາຫະນະຮັບໃຊ້ເຂົ້າໃນທຸລະກິດໂດຍສະເພາະ | ທຸກປະເພດພາຫະນະທີ່ນຳໃຊ້ເຂົ້າໃນການທຸລະກິດ | ລົດຂົນສິ່ງ, ຕຸກໆ, ເຮືອໂດຍສານ |
| 556 | ເຄື່ອງມື ແລະອຸປະກອນ | ຂະໜາດນ້ອຍທີ່ຮັບໃຊ້ເຂົ້າໃນການບໍລິຫານທຸລະກິດ | |

| | | | |
|---|---|---|---|
| 601 | ຊື້ທີ່ດິນ | | |
| 602 | ຊື້ເຮືອນຢູ່ | | |

## *ພາກທີ.VII ລາຍຮັບ ແລະ ການໂອນ*

ຄຳຖາມ1. ໃນໄລຍະ 1 ເດືອນຜ່ານມາ ໃນຄົວເຮືອນ ຂອງ ທ່ານມີໃຜແດ່ທີ່ມີລາຍຮັບ ຫຼື ໄດ້ຮັບຂອງຂັວນ ເປັນເງິນສົດ ຫຼືເປັນວັດຖຸ ?

ໃນຄຳຖາມນີ້ມີຄຳຕອບໃຫ້ເລືອກ ຄື : ລາຍຮັບຕົ້ນຕໍ , ລາຍຮັບຈາກຊັບສົມບັດ, ການໂອນ ແລະລາຍຮັບອື່ນໆ ທີ່ໄດ້ຮັບ .ການຈົດກ່າຍແມ່ນໃຫ້ສັງລວມ ເອົາລາຍຮັບທັງໝົດຂອງແຕ່ລະສະມາຊິກຄົວເຮືອນ.

ຕົວຢ່າງ : ຄົວເຮືອນນີ້ມີສະມາຊິກ 5 ຄົນ, ລາຍຮັບຕົ້ນຕໍ1

- ຄ່າແຮງງານແລະເງິນເດືອນເປັນເງິນສົດ ຊຶ່ງມີ 2ຄົນໄດ້ຮັບລວມເປັນ 580 000 ກີບ

ຕົວຢ່າງ:ລາຍຮັບຈາກຊັບສົມບັດ 2

-ດອກເບ້ຍ 400 000 ກີບ

- ເງິນປັນຜົນ(ໝາຍເຖິງເງິນແບ່ງປັນກຳໄລຈາກການຄ້າ-ການລົງທຶນຮ່ວມກັນ) 0

**ຕົວຢ່າງ:ການໂອນ ແລະ ລາຍຮັບອື່ນໆ3**

- ບຳນານ-ບຳເນັດ/ປະກັນໄພຊີວິດ(ແມ່ນລາຍຮັບຈາກການເຮັດໜ້າທີ່ການງານໃດນຶ່ງເມື່ອຮອດອາຍຸການແລ້ວ)
- ຂອງຂວັນທີ່ໄດ້ຮັບເປັນເງິນສົດຈາກລາວ(ອາດຈະແມ່ນເງິນຍ້ອງຍໍຊົມເຊີຍຕໍ່ຜົນງານໃດນຶ່ງທີ່ທ່ານໄດ້ສ້າງຄຸນງາມຄວາມດີ...)
- ຂອງຂວັນທີ່ໄດ້ຮັບເປັນເງິນສົດຈາກຕ່າງປະເທດ(ໃຫ້ປ່ຽນເປັນເງິນກີບສ່ວນຫລາຍຈະເປັນເງິນທີ່ໄດ້ຮັບຈາກຍາດຕິພີ່ນ້ອງ ຫລື ໝູ່ເພື່ອນ,ຜູ້ອຸປະຖຳໃດນຶ່ງ...)
- ຂອງຂວັນທີ່ໄດ້ຮັບເປັນວັດຖຸຈາກລາວ(ອາດຈະແມ່ນຂອງຂວັນຍ້ອງຍໍຊົມເຊີຍຕໍ່ຜົນງານໃດນຶ່ງທີ່ທ່ານໄດ້ສ້າງຄຸນງາມຄວາມດີ...ໃຫ້ຕີລາຄາເປັນເງິນສົດ)
- ຂອງຂວັນທີ່ໄດ້ຮັບເປັນວັດຖຸຈາກຕ່າງປະເທດ(ໃຫ້ຕີລາຄາວັດຖຸນັ້ນເປັນເງິນກີບສ່ວນຫລາຍຈະເປັນຂອງຂັວນທີ່ໄດ້ຮັບຈາກຍາດຕິພີ່ນ້ອງ ຫລື ໝູ່ເພື່ອນ,ຜູ້ອຸປະຖຳໃດນຶ່ງ...)

- ໄດ້ຮັບຈາກບ້ານ/ວັດ/ມູນນິທິອື່ນໆຕົວຢ່າງ: ລູກສາວຂອງທ່ານ ບຸນລວຍ ໄດ້ຮັບທຶນການສຶກສາຈາກສະມາຄົມ ຫລື ຈາກອົງການຊ່ວຍເຫລືອໃດນຶ່ງ.
- ໄດ້ຮັບຈາກການໂອນອື່ນໆ(ການໂອນມໍລະດົກ ຫລື ການໂອນຊັບສິນອື່ນໆ, ແມ່ນຈົດກ່າຍເອົາມູນຄ່າທັງໝົດທີ່ໄດ້ຮັບ ແລະ ຕີມູນຄ່າເປັນເງິນກີບ)

ຕົວຢ່າງການໃຊ້ຈ່າຍຢູ່ຕ່າງປະເທດໃນ 12 ເດືອນຜ່ານມາ

-ສຳລັບຄຳຖາມນີ້ແມ່ນຖາມໃນກໍລະນີທີ່ມີໃຜຜູ້ນຶ່ງ ຫລື ທັງສະມາຊິກໃນຄົວເຮືອນໄປຕ່າງປະເທດ, ໃຫ້ຈົດເອົາມູນຄ່າການໃຊ້ຈ່າຍລວມທັງໝົດ.

ຕົວຢ່າງ: ໃນ 12 ເດືອນຜ່ານມາຄົວເຮືອນທ່ານທິບສະຫວັນເດີນທາງໄປຫລິ້ນຢູ່ໜອງຄາຍ 2 ຄັ້ງ, ແມ່ນໃຫ້ລວມເອົາທຸກໆການ ໃຊ້ຈ່າຍທີ່ລາວໄດ້ຈ່າຍທັງໝົດໃນ ແຕ່ລະຄັ້ງເຊັ່ນວ່າ: ຄັ້ງທີ1 ໄດ້ຊື້ເຄື່ອງນຸ່ງ, ເຄື່ອງຫລິ້ນລູກ, ກິນເຂົ້າທ່ຽງ ມູນຄ່າ 2000 ບາດ, ແລະຄັ້ງທີ 2 ໄດ້ຊື້ເຄື່ອງຕອງນ້ຳ, ເຄື່ອງທະເລສົດ ແລະກິນເຂົ້າທ່ຽງ ມູນຄ່າ 5000 ບາດ, ສະນັ້ນມູນຄ່າລວມທັງສອງຄັ້ງແມ່ນ 7000 ບາດແຕ່ຕ້ອງໄລ່ເປັນ ເງິນກີບເພື່ອບັນທຶກລົງໃສ່ແບບສອບຖາມ.

**ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານທີ່ໃຫ້ຄວາມສົນໃຈອ່ານ ແລະ ສຶກສາແຕ່ຕົ້ນຕະຫລອດປາຍ.**

**ໂຊກດີ!**